# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ມິຖຸນາ 2025

ປີທີ 14

ສະບັບທີ 1020

ລາຍສັປະດາ


## ສານຂອງທ່ານນາຍົກລັດຖະມົນຕີໃນໂອກາດວັນເດັກສາກົນ 1 ມິຖຸນາ 2025



ບັນດາທ່ານທີ່ນັບຖື,

ຫຼານນ້ອຍເຍົາວະຊົນ ແລະ ອະນຸຊົນລາວບັນດາເຜົ່າທີ່ຮັກແພງທັງຫຼາຍ,

ເນື່ອງໃນໂອກາດວັນເດັກສາກົນວັນທີ 1 ມິຖຸນາ 2025 ໄດ້ໝູນວຽນມາຄົບຮອບອີກວາລະໜຶ່ງ ເຊິ່ງປຽບດັ່ງປາງບຸນໃຫຍ່ຂອງເດັກໃນທົ່ວໂລກ ທີ່ບັນດາປະເທດໄດ້ພ້ອມກັນສະເຫຼີມສະຫຼອງວັນດັ່ງກ່າວໃຫ້ກັບເດັກໃນປະເທດຂອງຕົນຢ່າງເປັນຂະບວນຟົດຟື້ນດ້ວຍຫຼາຍຮູບການ, ການສະເຫຼີມສະຫຼອງວັນເດັກກໍເພື່ອສົ່ງເສີມສິດ ແລະ ສະພາບແວດລ້ອມທີ່ດີໃຫ້ແກ່ເດັກ; ສຳລັບ ສປປລາວ ພວກເຮົາ ຍັງໄດ້ກຳ

ອ່ານຕໍ່ໜ້າ 8

## ປັບປຸງບຸກຄະລາກອນຂອງລັດຖະບານ



(ສພຊ) - ຕອນບ່າຍວັນສຸກທີ 6 ມິຖຸນານີ້, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບການປັບປຸງບຸກຄະລາກອນຂອງລັດຖະບານ ເຊິ່ງທ່ານໃຫ້ຮູ້ວ່າ: ອີງຕາມໜັງສືສະເໜີຂອງນາຍົກລັດຖະມົນຕີ ສະບັບເລກທີ 76/ນຍ, ລົງວັນທີ 4 ມິຖຸນາ 2025 ແລະມະຕິຂອງກອງປະຊຸມວິສາມັນຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 164 /ຄປຈ, ລົງວັນທີ 6 ມິຖຸນາ 2025 ກ່ຽວກັບການຮັບຮອງເອົາຄຳສະເໜີຂອງນາຍົກລັດຖະມົນຕີ ກ່ຽວກັບການຍົກຍ້າຍ, ແຕ່ງຕັ້ງແລະການພັກການຮັບອຸດໜູນບຳນານຂອງສະມາຊິກລັດຖະບານ.

I. ເຫັນດີຮັບຮອງເອົາການຍົກຍ້າຍ ແລະ ແຕ່ງຕັ້ງຄືນໃໝ່ ສະມາຊິກລັດຖະບານ ຈຳນວນ 9 ທ່ານ, ຍິງ 2 ທ່ານດັ່ງນີ້:

1. ແຕ່ງຕັ້ງທ່ານ ຣສ. ປອ. ທອງສະລິດ ມັງໜໍ່ເມກ ເລ

ອ່ານຕໍ່ໜ້າ 12



ແນວຄິດປະທານ

ໄກສອນ ພົມວິຫານ

ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ໃນເງື່ອນໄຂພັກກຳອຳນາດ ພວກເຮົາຕ້ອງເຂົ້າໃຈວ່າ ລັດຖະທຳມະນູນ, ກົດໝາຍ, ດຳລັດຕ່າງໆຂອງລັດ ລ້ວນແຕ່ແມ່ນແນວທາງຂອງພັກ ທີ່ໄດ້ຫັນເປັນອັນລະອຽດ; ສະນັ້ນ ອົງການພັກ, ອຳນາດການປົກຄອງທຸກຂັ້ນ ຕ້ອງເຄົາລົບ ແລະ ປະຕິບັດຢ່າງເຂັ້ມງວດ.

(ບົດໂອ້ລົມຕໍ່ກອງປະຊຸມຈັດຕັ້ງທົ່ວປະເທດ ຄັ້ງທີ 7, ໜ້າ 11)

ຢາກໃຫ້ການຕິຊົມຕົນເອງ ແລະ ຕິຊົມກັນ ດຳເນີນໄປຢ່າງໄດ້ຮັບຜົນດີນັ້ນ ພວກເຮົາຕ້ອງຢຶດໝັ້ນໃນຫຼັກການຂອງພັກ, ມີຄວາມຊື່ສັດບໍລິສຸດ, ຈິງໃຈຕໍ່ກັນ ແລະ ຮັກແພງກັນຖານສະຫາຍ.

(ບົດໂອ້ລົມຕໍ່ກອງປະຊຸມຈັດຕັ້ງທົ່ວປະເທດ ຄັ້ງທີ 7, ໜ້າ 10)

ອ່ານຕໍ່ສະບັບໜ້າ

## ສຳເລັດການຍົກສູງຄຸນນະພາບເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 9



(ສພຊ) - ກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝເທື່ອທີ 9 ຂອງສະພາແຫ່ງຊາດ (ສພຊ) ຊຸດທີIX ໄດ້ປິດລົງດ້ວຍຜົນສຳເລັດຢ່າງຈົບງາມ ໃນວັນທີ 6 ມິຖຸນານີ້ ພາຍຫຼັງດຳເນີນມາເປັນເວລາ 4 ວັນ ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກຮອງປະທານສະພາແຫ່ງຊາດ; ມີບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ), ລັດຖະມົນຕີ, ຮອງລັດຖະມົນຕີ ກະຊວງ ແລະ ອົງການທີ່ກ່ຽວຂ້ອງ ພ້ອມດ້ວຍແຂກຖືກເຊີນເຂົ້າຮ່ວມຢ່າງຫຼວງຫຼາຍ. ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນ

ອ່ານຕໍ່ໜ້າ 7

## ຄະນະຜູ້ແທນລາວ ເຂົ້າຮ່ວມແລກປ່ຽນ ແລະ ຮຽນຮູ້ດ້ານອະລິຍະທຳ ຢູ່ ສປຈີນ




(ສພຊ) - ໂດຍຕອບສະໜອງຕາມການເຊີນຂອງສະມາຄົມເພື່ອການແລກປ່ຽນສາກົນແຫ່ງປະເທດຈີນ, ຄະນະຜູ້ແທນຄະນະສັນຕິພາບ ແລະ ສາມັກຄີຂອງລາວນຳໂດຍທ່ານສົມມາດ ພົລເສນາ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານຄະນະສັນຕິພາບ ແລະ ສາມັກຄີຂອງລາວ ໄດ້ເຂົ້າຮ່ວມກອງປະຊຸມແລກປ່ຽນ ແລະ ຮຽນຮູ້ເຊິ່ງກັນແລະກັນດ້ານອະລິຍະທຳ ຄັ້ງທີ IV ແລະ ຢ້ຽມຢາມ ສປຈີນ ແຕ່ວັນທີ 28/5-4/6/2025.

ວັນທີ29ພຶດສະພາ, ຄະນະຜູ້ແທນໄດ້ເຂົ້າຮ່ວມພິທີເປີດ

ອ່ານຕໍ່ໜ້າ 7

## ສະພາແຫ່ງຊາດ ຈະຮັບຮອງເອົາມະຕິ 17 ສະບັບ



(ສພຊ) - ຕອນສວາຍວັນພະຫັດທີ 5 ມິຖຸນານີ້, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງທ່ານໃຫ້ຮູ້ວ່າ: ບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ ໄດ້ປະສານສົມທົບກັບລັດຖະບານ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ ແລະ ພາກສ່ວນກ່ຽວຂ້ອງ ໃນການກະກຽມເນື້ອໃນຂອງແຕ່ລະພາກສ່ວນ ທີ່ຈະນຳເຂົ້າພິຈາລະນາຕົກລົງຢູ່ກອງປະຊຸມສະພາແຫ່ງຊາດໃນຄັ້ງນີ້; ມາເຖິງປັດຈຸບັນ ເຫັນວ່າການກະກຽມແມ່ນໄດ້ມີຄວາມຮັບປະກັນຮອບດ້ານ, ຄົບຖ້ວນ, ສອດຄ່ອງກັບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍແລ້ວ.

ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ຈະໄດ້ໄຂຂຶ້ນ

ອ່ານຕໍ່ໜ້າ 7

## ຕິດຕາມກວດກາການປະຕິບັດຄາດໝາຍຊີງເຂດວັດທະນະທຳ-ສັງຄົມ




ອ່ານຕໍ່ໜ້າ 11



ສັນຍານອັນຕະລາຍ... (ໜ້າ 9)



ຄະນະປະຈຳ... (ໜ້າ 10)

ເຝົ້າໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

ກົດໝາຍເພື່ອປົກປ້ອງ... (ໜ້າ 12)

**ຊົມເຊີຍວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ 1 ມິຖຸນາ 2025 ຢ່າງສຸດໃຈ!**

# ສະພາແຫ່ງຊາດ ສ້າງຂະບວນການປູກຕົ້ນໄມ້



(ສພຊ) - ຕອນເຊົ້າວັນທີ2 ມິຖຸນານີ້ທີ່ສະພາແຫ່ງຊາດ ໄດ້ສ້າງຂະບວນການປູກຕົ້ນໄມ້ ເພື່ອສະເຫຼີມສະຫຼອງວັນປູກຕົ້ນໄມ້ແຫ່ງຊາດ ໃຫ້ເປັນຂະບວນຟົດຟື້ນ ເຊິ່ງນຳໂດຍທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະນຳ ແລະ ພະນັກງານພາຍໃນສະພາແຫ່ງຊາດເຂົ້າຮ່ວມ.

ໃນວັນດຽວກັນ, ທ່ານ ນາງ ປິ່ງຄຳ ລາຊະສິມມາ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ), ທ່ານ ໄຊສົງຄາມ ມະໂນທຳຮອງລັດຖະມົນຕີກະຊວງໂຍທາທິການແລະຂົນສົ່ງພ້ອມດ້ວຍອົງການຈັດຕັ້ງມະຫາຊົນຂອງ ກສຕສ ແລະ ສະຖານີລົດໄຟຄຳສະຫວາດ ໄດ້ສ້າງຂະບວນການປູກຕົ້ນໄມ້ຢູ່ສະຖານີລົດໄຟຄຳສະຫວາດ ນະຄອນຫຼວງວຽງຈັນ ພ້ອມທັງຮັບຟັງການລາຍງານສະພາບການໂດຍຫຍໍ້ຂອງສະຖານີດັ່ງກ່າວແລະສົນທະນາແລກປ່ຽນຄຳຄິດຄຳເຫັນອີກດ້ວຍ.



# ສະຖານທູດຫວຽດນາມ ມອບເງິນໃຫ້ກອງທຶນຊ່ວຍເຫຼືອສັງຄົມ




(ສພຊ) - ວັນທີ 29 ພຶດສະພານີ້ ທີ່ສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບເງິນ ຈຳນວນ 128 ລ້ານກີບ ໂດຍການກ່າວມອບຂອງສະຫາຍ ຫງວຽນ ມິ່ງເຕິ່ມ ເອກອັກຄະລັດຖະທູດຜູ້ມີອຳນາດເຕັມ ແຫ່ງ ສສ.ຫວຽດນາມປະຈຳສປປລາວແລະກ່າວຮັບຂອງສະຫາຍ ດຣ. ນາງ ວິພາວັນ ພົມວິຫານ ປະທານກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ ເຊິ່ງມີສະຫາຍ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ ພ້ອມດ້ວຍພາກສ່ວນກ່ຽວຂ້ອງຂອງທັງສອງຝ່າຍເຂົ້າຮ່ວມເປັນສັກຂີພະຍານ; ເມື່ອວັນທີ 17 ພຶດສະພາ ທີ່ຫໍວັດທະນະທຳແຫ່ງຊາດ, ສະຫາຍຫງວຽນມິ່ງເຕິ່ມກໍໄດ້ມອບເງິນຈຳນວນ 200ລ້ານກີບເຊິ່ງກ່າວຮັບໂດຍສະຫາຍ ນາງ ອຳໄພວອນ ລ້ອມບຸນແພງ.

**(ນາງ ກຸກກີກ ບຸດດາໄຊ)**




# ຖອດຖອນບົດຮຽນການຮັບ, ພິຈາລະນາ ແລະ ແກ້ໄຂຄຳຮ້ອງຂໍຄວາມເປັນທຳ




(ສພຊ) - ວັນທີ 29-30 ພຶດສະພາຜ່ານມາ, ກຳມາທິການຍຸຕິທຳສະພາແຫ່ງຊາດ ໄດ້ຈັດກອງປະຊຸມຖອດຖອນບົດຮຽນກ່ຽວກັບການຮັບ, ພິຈາລະນາ ແລະແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງຄະນະປະຈຳສະພາແຫ່ງຊາດ ແລະຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໂດຍການເປັນປະທານຂອງທ່ານ ນາງ ທຸມມາລີ ວົງພະຈັນ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການຍຸຕິທຳ; ມີທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ຜູ້ຊີ້ນຳວຽກງານກຳມາທິການຍຸຕິທຳໃຫ້ກຽດເຂົ້າຮ່ວມ ແລະ ມີຄຳເຫັນໂອ້ລົມຕໍ່ກອງປະຊຸມ; ນອກນັ້ນ, ຍັງມີທ່ານເລຂາທິການສະພາແຫ່ງຊາດ, ບັນດາທ່ານຮອງປະທານກຳມາທິການຍຸຕິທຳ, ປະທານ-ຮອງປະທານສະພາປະຊາຊົນຂັ້ນແຂວງ, ປະທານ-ຮອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຈາກສະພາປະຊາຊົນ 18 ແຂວງທົ່ວປະເທດ ພ້ອມດ້ວຍຄະນະກົມ, ພະແນກ ແລະ ພະນັກງານທີ່ກ່ຽວຂ້ອງຈາກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເຂົ້າຮ່ວມຫຼາຍກວ່າ 120 ທ່ານ.

ກອງປະຊຸມຄັ້ງນີ້ເປັນຄັ້ງທຳອິດທີ່ໄດ້ມີການສະຫຼຸບຖອດຖອນບົດຮຽນກ່ຽວກັບວຽກງານຄຳຮ້ອງຂໍຄວາມເປັນທຳໃນຕະຫຼອດ 5 ປີຜ່ານມາ ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກະກຽມໃຫ້ແກ່ສະພາແຫ່ງຊາດ ຊຸດທີ X; ການຮັບ, ພິຈາລະນາແລະແກ້ໄຂຄຳຮ້ອງຂໍຄວວາມເປັນທຳຂອງຄະນະປະຈຳສະພາແຫ່ງຊາດ ແລະຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແມ່ນວຽກງານໜຶ່ງທີ່ສຳຄັນໃນການປະຕິບັດພາລະບົດບາດຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ ສະບັບປີ 2023 ແລະ ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບປີ 2022.

ກອງປະຊຸມໄດ້ຮັບຟັງການລາຍງານສະພາບການຈັດຕັ້ງປະຕິບັດວຽກງານແກ້ໄຂຄຳຮ້ອງທຸກໂດຍສະເພາະແມ່ນການຮັບ, ພິຈາລະນາ ແລະ ແກ້ໄຂຄຳຮ້ອງຂໍຄວາມເປັນທຳ ຂອງຄະນະປະຈຳສະພາແຫ່ງຊາດ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນໄລຍະ 5 ປີ (2021-2025) ແລະ ທິດທາງແຜນການໃນຕໍ່ໜ້າ; ຈາກນັ້ນ, ຜູ້ແທນເຂົ້າຮ່ວມກອງປະຊຸມໄດ້ຄົ້ນຄວ້າ, ປະກອບຄຳເຫັນຢ່າງກົງໄປກົງມາດ້ວຍບັນຍາກາດທີ່ສ້າງສັນຕໍ່ພາກສະຫຼຸບ ແລະ ທິດທາງແຜນການໃນຕໍ່ໜ້າເຊິ່ງກອງປະຊຸມກໍເຫັນດີເປັນເອກະພາບຕໍ່ຜົນສຳເລັດທີ່ຍາດມາໄດ້ໃນການສ້າງ ແລະ ປັບປຸງນິຕິກຳເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ເປັນຕົ້ນ ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບປີ 2022, ມະຕິຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ສະບັບເລກທີ 07/ຄປຈ, ລົງວັນທີ09 ມັງກອນ 2023, ຂໍ້ຕົກລົງການປະສານງານຂອງກຳມາທິການຍຸຕິທຳສະພາແຫ່ງຊາດ, ອົງການໄອຍະການສານປະຊາຊົນສູງສຸດ ແລະອື່ນໆ.

ສະພາແຫ່ງຊາດ ໄດ້ຮັບຄຳຮ້ອງຂໍຄວາມເປັນທຳ ທັງໝົດ 2,010 ເລື່ອງ, ໃນນີ້ເປັນຄຳຮ້ອງທີ່ຄ້າງມາແຕ່ສະພາແຫ່ງຊາດ ຊຸດທີVIII ຈຳນວນ 404 ເລື່ອງ, ຄຳຮ້ອງເຂົ້າໃໝ່ໃນສະພາແຫ່ງຊາດ ຊຸດທີ IX (ນັບຮອດເດືອນພຶດສະພາ 2025) ຈຳນວນ 1,606 ເລື່ອງ; ສາມາດພິຈາລະນາໄດ້ 1,355 ເລື່ອງ ກວມເອົາ 67.41% ຂອງຈຳນວນຄຳຮ້ອງທັງໝົດ 2,010 ເລື່ອງ, ແຕ່ຖ້າຄິດໄລ່ໃສ່ຄຳຮ້ອງທີ່ເຂົ້າມາໃນສະພາແຫ່ງຊາດ ຊຸດທີ IX ແມ່ນສາມາດພິຈາລະນາແກ້ໄຂໄດ້ 84.37%. ຄຽງຄູ່ກັບຜົນສຳເລັດດັ່ງກ່າວ, ຜູ້ແທນກອງປະຊຸມຍັງໄດ້ຕີລາຄາຢ່າງພາວະວິໄສຕໍ່ຈຸດອ່ອນຄົງຄ້າງ, ສາເຫດ ແລະ ບົດຮຽນທີ່ຖອດຖອນໄດ້ໃນ 5 ປີຜ່ານມາ ເພື່ອເປັນພື້ນຖານແກ່ການກຳນົດທິດທາງໃນຕໍ່ໜ້າ ເຊິ່ງກອງປະຊຸມໄດ້ຄົ້ນຄວ້າແລະເປັນເອກະພາບຕໍ່ການກຳນົດ 12 ວຽກຈຸດສຸມໃນຕໍ່ໜ້າ ເປັນຕົ້ນແມ່ນ: ການປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບປີ 2022 ແລະ ນິຕິກຳຮັບໃຊ້ແກ່ວຽກງານພິຈາລະນາ ແລະ ແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງຄະນະປະຈຳສະພາແຫ່ງຊາດ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃຫ້ສອດຄ່ອງກັບລັດຖະທຳມະນູນ ສະບັບປີ 2025 ແລະ ກົດໝາຍກ່ຽວຂ້ອງທີ່ໄດ້ມີການປັບປຸງ ລວມທັງການໂຄສະນາເຜີຍແຜ່ໃຫ້ກວ້າງຂວາງ; ປັບປຸງກົງຈັກການຈັດຕັ້ງລວມທັງການສຶກສາອົບຮົມການເມືອງແນວຄິດ, ຈັນຍາບັນ ຈັນຍາທຳ, ຍົກລະດັບທິດສະດີການເມືອງວິຊາການ ພາສາຕ່າງປະເທດ ແລະ ໄອທີ ໃຫ້ແກ່ພະນັກງານ-ລັດຖະກອນທີ່ຮັບຜິດຊອບວຽກງານດັ່ງກ່າວ ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານໃນໄລຍະໃໝ່; ສືບຕໍ່ປັບປຸງແກ້ໄຂການປະສານງານ, ແບບແຜນວິທີເຮັດວຽກ, ການຕິດຕາມກວດກາຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳ ທີ່ຄະນະປະຈຳສະພາແຫ່ຊາດ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໄດ້ນຳສົ່ງພາກສ່ວນກ່ຽວຂ້ອງພິຈາລະນາແກ້ຕາມພາລະບົດບາດ ແລະ ຕາມທີ່ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ; ຍົກສູງຄຸນນະພາບໃນການຮັບ, ການຄົ້ນຄວ້າ ແລະ ພິຈາລະນາແກ້ໄຂຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ມີຄວາມຄົບຖ້ວນ, ຮອບດ້ານ, ພາວະວິໄສ, ຖືກຕ້ອງຕາມກົດໝາຍ ແລະ ຄວາມເປັນທຳ ເພື່ອໃຫ້ມີຄວາມຍຸຕິທຳໃນສັງຄົມ;

ອ່ານຕໍ່ໜ້າ 3

# ປະທານ ກຜງສ ເຄື່ອນໄຫວເຮັດວຽກຢູ່ແຂວງສາລະວັນ




(ສພຊ) - ວັນທີ 29-30 ພຶດສະພາຜ່ານມາ, ທ່ານ ປອ. ລີເບີ ລີບົວປາວ ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ (ກຜງສ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 5 ປີ ຄັ້ງທີ IX ແລະການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດປະຈຳປີ2025ຢູ່ແຂວງສາລະວັນ ໂດຍໄດ້ເປີດກອງປະຊຸມທີ່ສະພາປະຊາຊົນແຂວງ ເຊິ່ງມີທ່ານ ສີເຮັງ ຫອມສົມບັດ ປະທານສະພາປະຊາຊົນແຂວງ, ທ່ານ ພູທົງ ຄຳມະນີວົງ ຮອງເຈົ້າແຂວງ ຜູ້ຊີ້ນຳວຽກງານຂົງເຂດເສດຖະກິດແລະຕາງໜ້າຈາກພາກສ່ວນທີ່ກ່ຽວຂ້ອງຂອງແຂວງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານວຽກງານຈາກພະແນກການຂອງແຂວງ ກ່ຽວກັບຜົນສຳເລັດ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ສາມາດຖອດຖອນໄດ້ໃນການຈັດຕັ້ງຜັນຂະຫຍາຍການຈັດຕັ້ງປະຕິບັດ 5 ວຽກຈຸດສຸມຂອງວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຂໍ້ຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນພາຍໃນແຂວງ; ຜົນໄດ້ຮັບ, ຄວາມຄືບໜ້າຂອງບັນດາຄາດໝາຍເສດຖະກິດມະຫາພາກ ແລະຂອງຂະແໜງການ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳປີ 2025ຕາມມະຕິກອງປະຊຸມສະພາປະຊາຊົນແຂວງຮັບຮອງ; ຜົນສຳເລັດ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ທິດທາງ ແລະ ວິທີແກ້ໄຂໃນຕໍ່ໜ້າ ໃນການຈັດຕັ້ງປະຕິບັດແຜນງົບປະມານຂອງແຂວງ ປະຈຳປີ 2025. ຈາກນັ້ນ, ກໍໄດ້ມີການສົນທະນາແລກປ່ຽນຄຳຄິດຄຳເຫັນ ແລະ ໃຫ້ຂໍ້ມູນ ເພື່ອຊອກໃຫ້ເຫັນດ້ານດີທີ່ຄວນເສີມຂະຫຍາຍ, ຊຸກຍູ້ສິ່ງເສີມແລະດ້ານອ່ອນຂໍ້ຄົງຄ້າງທີ່ຈະຕ້ອງຊອກຫາວິທີການແກ້ໄຂ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ແນໃສ່ເຮັດໃຫ້ພາກສ່ວນກ່ຽວຂ້ອງຈັດຕັ້ງປະຕິບັດຖືກຕ້ອງຕາມກົດໝາຍ, ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຕ່ລະໄລຍະ ທັງເປັນຂໍ້ມູນພື້ນຖານໃຫ້ແກ່ການຄົ້ນຄວ້າລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດແລະເປັນຂໍ້ມູນສຳຄັນກະກຽມໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ9 ຂອງສະພາແຫ່ງຊາດ ຊຸດທີ IX.

ນອກຈາກນັ້ນ, ຍັງໄດ້ເຮັດວຽກຮ່ວມກັບອົງການປົກຄອງເມືອງສະໝ້ວຍແລະເມືອງລະຄອນເພັງ ໂດຍໄດ້ຮັບຟັງລາຍງານສະພາບພົ້ນເດັ່ນ, ຜົນສຳເລັດການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃນໄລຍະຜ່ານມາ ແລະ ການບໍລິຫານ-ຄຸ້ມຄອງດ່ານສາກົນລະໄລ ໃນການການນຳເຂົ້າ-ສົ່ງອອກສິນຄ້າຜ່ານດ່ານສາກົນ, ການເກັບລາຍຮັບພາສີອາກອນໃນໄລຍະ6ເດືອນຕົ້ນປີ 2025 ແລະ ໂຄງການກໍ່ສ້າງສ້ອມແປງເສັ້ນທາງໄປດ່ານໂກຕາຍ ຊາຍແດນລາວ-ຫວຽດນາມ; ລົງຕິດຕາມກວດກາພື້ນທີ່ຕົວຈິງສະຖານທີ່ຈຸດຄ່ຽນຖ່າຍຖ່ານຫີນເພື່ອສົ່ງອອກໄປຍັງສສ. ຫວຽດນາມ ຂອງກຸ່ມບໍລິສັດພອນສັກ ແລະ ສະພາບຄວາມຄືບໜ້າຂອງໂຄງການກໍ່ສ້າງຕາຝັ່ງເຈື່ອນ ລະຫວ່າງເຂດຊາຍແດນດ່ານສາກົນປາກຕະພານ ເມືອງລະຄອນເພັງ ແລະ ດ່ານຖາວອນບ້ານປາກແຊງອຳເພີນາຕານ ຈັງຫວັດອຸບົນຣາຊະທານີ, ລາຊະອານາຈັກໄທ.

**(ດີລຳພົນ ພົມມະຈັນ)**

# ປະທານກຳມາທິການຍຸຕິທຳ ຮັບການເຂົ້າຢ້ຽມຂຳນັບຂອງເລຂາເອກ ສະຖານທູດຍີ່ປຸ່ນ ປະຈຳ ສປປລາວ



(ສພຊ) - ວັນຈັນທີ 2 ມິຖຸນານີ້ ທີ່ຫໍສະພາແຫ່ງຊາດ, ທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການຍຸຕິທຳ, ປະທານຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ ໄດ້ຕ້ອນຮັບການເຂົ້າຢ້ຽມຂຳນັບຂອງທ່ານ ມິດສືໂມໂຕະ ນາຊາຣິໂກະ (Mitsumoto Nasahiko) ເລຂາເອກ ຮັບຜິດຊອບພະແນກການເມືອງຂອງສະຖານເອກະອັກຄະລາຊະທູດຍີ່ປຸ່ນ ປະຈຳ ສປປລາວ ພ້ອມດ້ວຍຄະນະ; ການເຂົ້າຢ້ຽມຂຳນັບຄັ້ງນີ້ ກໍເພື່ອປຶກສາຫາລືກ່ຽວກັບຜົນການມາຢ້ຽມຢາມຂອງທ່ານຊາຊາກິທາ ໂຣະເລຂາທິການສະມາຄົມມິດຕະພາບລັດຖະສະພາຍີ່ປຸ່ນ-ລາວ, ແລກປ່ຽນຄຳຄິດເຫັນໃນການເພີ່ມທະວີ ແລະ ເສີມຂະຫຍາຍການຮ່ວມມືລະຫວ່າງສອງຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ, ຍີ່ປຸ່ນ-ລາວ ກໍຄືການກຳນົດທິດທາງແຜນການຮ່ວມມືໃນຕໍ່ໜ້າ.

ທ່ານ ນາງ ທຸມມາລີ ວົງພະຈັນ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ສະຖານທູດຍີ່ປຸ່ນ ທີ່ເວລາໃດກໍເອົາໃຈໃສ່ປະກອບສ່ວນເຂົ້າໃນການເສີມສ້າງສາຍພົວພັນມິດຕະພາບ ແລະການຮ່ວມມືລະຫວ່າງສອງປະເທດ ເວົ້າລວມ, ເວົ້າສະເພາະລະຫວ່າງສອງອົງການນິຕິບັນຍັດ ກໍຄືສອງຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ, ຍີ່ປຸ່ນ-ລາວ. ດ້ວຍການປະກອບສ່ວນ, ຊຸກຍູ້ ແລະ ອຳນວຍຄວາມສະດວກໃຫ້ແກ່ສະພາແຫ່ງຊາດ ກໍຄືຄະນະຜູ້ແທນຂອງສະພາແຫ່ງຊາດໃນຕະຫຼອດໄລຍະຜ່ານມາ ຈຶ່ງເຮັດໃຫ້ສາຍພົວພັນຮ່ວມມືດັ່ງກ່າວ ໂດຍສະເພາະແມ່ນການເຄື່ອນໄຫວວຽກງານຂອງຄະນະມິດຕະພາບລັດຖະສະພາຂອງສອງປະເທດ ໄດ້ມີບັນຍາກາດອັນໃໝ່ທີ່ດີຂຶ້ນ, ມີຜົນງານດີເດັ່ນຫຼາຍດ້ານ ແລະ ມີຜົນສຳເລັດໃຫຍ່ຫຼວງກວ່າເກົ່າ; ໂດຍສະເພາະ,ເພື່ອເປັນການສະເຫຼີມສະຫຼອງວັນການທູດລາວ-ຍີ່ປຸ່ນ ຄົບຮອບ 70 ປີ ໃນປີ 2025 ສອງຄະນະມິດຕະພາບລັດຖະສະພາຂອງສອງປະເທດ ຈະໄດ້ມີໂອກາດພົບປະແລກປ່ຽນຄະນະຜູ້ແທນເຊິ່ງກັນແລະກັນ.

ທ່ານ ມິດສືໂມໂຕະ ນາຊາຣິໂກະໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ລາຍການໃຫ້ຮູ້ກ່ຽວກັບຈຸດປະສົງຂອງການມາປຶກສາຫາລືວຽກງານໃນຄັ້ງນີ້ ພ້ອມທັງຕີລາຄາສູງຕໍ່ສາຍພົວພັນມິດຕະພາບທີ່ເປັນມູນເຊື້ອອັນດີງາມ ແລະຄູ່ຮ່ວມຍຸດທະສາດລະຫວ່າງສອງປະເທດ ຍີ່ປຸ່ນ-ລາວ ກໍຄືສອງອົງການນິຕິບັນຍັດໃຫ້ເປັນຮູບປະທຳຍິ່ງໆຂຶ້ນ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

# ກອງທຶນຊ່ວຍເຫຼືອສັງຄົມ ຮ່ວມສະຫຼອງວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ ຢູ່ໂຮງຮຽນປະຖົມສົມບູນໂນນຂີ້ເຫຼັກ



(ສພຊ) - ວັນທີ 30 ພຶດສະພານີ້, ຄະນະກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ ນຳໂດຍທ່ານ ດຣ. ນາງ ວິພາວັນ ພົມວິຫານ ປະທານກອງທຶນດັ່ງກ່າວ ແລະພຣະອາຈານ ບຸນເສີຍ ເພົາພາສິດ ເຈົ້າອະທິການວັດມິ່ງແກ້ວມຸງຄຸນໄຊຍະຣາມ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມພິທີສະເຫຼີມສະຫຼອງວັນເດັກນ້ອຍສາກົນ ຄົບຮອບ 100 ປີ ແລະ ວັນປູກຕົ້ນໄມ້ແຫ່ງຊາດ ຄົບຮອບ 45 ປີ ຮ່ວມກັບນ້ອງນ້ອຍນັກຮຽນ ແລະ ຄູອາຈານ ທີ່ໂຮງຮຽນປະຖົມສົມບູນໂນນຂີ້ເຫຼັກ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ; ພ້ອມກັນນັ້ນ, ຍັງໄດ້ນຳເອົາອຸປະກອນການສຶກສາ ແລະເງິນສົດ40ລ້ານກີບ ມອບໃຫ້ໂຮງຮຽນດັ່ງກ່າວອີກດ້ວຍ.

ທັງນີ້, ກໍເພື່ອປູກຈິດສຳນຶກໃຫ້ແກ່ເຍົາວະຊົນ ແລະ ອະນຸຊົນ, ພໍ່ແມ່ຜູ້ປົກຄອງ ກໍຄືອຳນາດການປົກຄອງ, ການຈັດຕັ້ງທຸກຂັ້ນ ເຫັນໄດ້ຄວາມສຳຄັນຂອງວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ ວັນທີ 1 ມິຖຸນາ.

**(ນາງ ກຸກກິກ ບຸດດາໄຊ)**




## ຖອດຖອນ...

(ຕໍ່ຈາກໜ້າ 2)

ເພີ່ມທະວີການພົວພັນຮ່ວມມື, ແລກປ່ຽນບົດຮຽນກ່ຽວກັບວຽກງານແກ້ໄຂຄຳຮ້ອງທຸກ ກັບບັນດາປະເທດ, ອົງການຈັດຕັ້ງສາກົນ ຕາມແຜນທາງການຕ່າງປະເທດຂອງພັກ .

ກອງປະຊຸມຄັ້ງນີ້ຍັງໄດ້ຮັບກຽດໂອ້ລົມຈາກທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໂດຍທ່ານໄດ້ສະແດງຄວາມເຫັນດີເປັນເອກະພາບຕໍ່ການສະຫຼຸບຕີລາຄາ ແລະ ວຽກງານຈຸດສຸມໃນຕໍ່ໜ້າ ພ້ອມທັງເນັ້ນໜັກໃຫ້ກຳມາທິການຍຸຕິທຳສະພາແຫ່ງຊາດ, ຄະນະກຳມາການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນຂັ້ນແຂວງ ໃນການເປັນໃຈກາງປະສານງານ ແລະ ຮັບຜິດຊອບໂດຍກົງຕໍ່ວຽກງານແກ້ໄຂຄຳຮ້ອງທຸກ; ເອົາໃຈໃສ່ປັບປຸງແລະຍົກລະດັບຕິດຕາມກວດກາຂອງຄະນະປະຈຳສະພາແຫ່ງຊາດ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕໍ່ວຽກງານດັ່ງກ່າວ; ປັບປຸງກົນໄກ, ແບບແຜນວິທີເຮັດວຽກ ໃນການຮັບ, ພິຈາລະນາແກ້ໄຂຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳ ໃຫ້ມີຄວາມໂລ່ງລ່ຽນ, ວອງໄວ, ໂປ່ງໃສ ແລະ ຍຸຕິທຳຕາມກົດໝາຍ ແລະ ມະຕິຂອງກົມການເມືອງ ສະບັບເລກທີ 112/ກມສພ, ລົງວັນທີ 02/6/2020; ສູ້ຊົນຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳໃຫ້ສາມາດບັນລຸໄດ້ຕາມແຜນການທີ່ວາງໄວ້ 85% ຂອງຈຳນວນຄຳຮ້ອງຂໍຄວາມເປັນທຳທັງໝົດທີ່ເຂົ້າມາສະພາແຫ່ງຊາດ ແລະ 95% ທີ່ເຂົ້າມາສະພາປະຊາຊົນຂັ້ນແຂວງ ເພື່ອປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງໄດ້ຮັບການປົກປ້ອງຕາມກົດໝາຍ, ເຮັດໃຫ້ການຄຸ້ມຄອງລັດຄຸ້ມຄອງສັງຄົມດ້ວຍກົດໝາຍ ໄດ້ຮັບການຈັດຕັ້ງປະຕິບັດຕົວຈິງຢ່າງໜັກແໜ້ນ.

## ກວດກາເນື້ອໃນຮອບດ້ານຮ່າງກົດໝາຍສານປະຊາຊົນ



(ສພຊ) - ວັນພະຫັດທີ 29 ພຶດສະພາຜ່ານມາ ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມກວດກາເນື້ອໃນຮອບດ້ານຮ່າງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ (ສະບັບປັບປຸງ) ໂດຍການເປັນປະທານຂອງທ່ານ ຄຳແພງ ວິລະພັນ ຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ), ປະທານກຳມາທິການກົດໝາຍ; ເຂົ້າຮ່ວມມີບັນດາທ່ານຮອງປະທານກຳມາທິການຂອງ ສພຊ, ຮອງລັດຖະມົນຕີກະຊວງ ແລະ ອົງການທີ່ກ່ຽວຂ້ອງ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງ ຄປຈສພຊ, ຫົວໜ້າ-ຮອງຫົວໜ້າກົມ, ຄະນະພະແນກ ແລະ ພະນັກງານ-ລັດຖະກອນຈາກພາກສ່ວນທີ່ກ່ຽວຂ້ອງ.

ທ່ານບຸນຂວາງ ທະວີສັກ ຮອງປະທານສານປະຊາຊົນສູງສຸດ ໄດ້ສະເໜີເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ ໂດຍໃຫ້ຮູ້ວ່າ: ສານປະຊາຊົນສູງສຸດ ໄດ້ກຳນົດແຜນພັດທະນາລະບົບສານປະຊາຊົນ 5 ປີ ຄັ້ງທີ IV (2021-2025) ເພື່ອກຳນົດແຜນງານ, ໂຄງການ ໃນການຄຸ້ມຄອງແລະການເຄື່ອນໄຫວການປະຕິບັດໜ້າທີ່ຂອງຜູ້ພິພາກສາ ໃຫ້ມີຄວາມໂປ່ງໃສ ໃນທຸກຂັ້ນຕອນຂອງການດຳເນີນຄະດີ ແລະ ຮັບປະກັນໃຫ້ການຕັດສິນຄະດີຖືກຕ້ອງກັບກົດໝາຍ ແລະ ຄວາມເປັນຈິງໄປຄຽງຄູ່ກັນ; ຮັບປະກັນການຄຸ້ມຄອງມະຫາພາກຂອງສານປະຊາຊົນສູງສຸດ ຕໍ່ສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ ຢ່າງມີປະສິດທິພາບ ໂດຍສະເພາະການແຕ່ງຕັ້ງ, ຍົກຍ້າຍ, ສັບປ່ຽນບ່ອນປະຈຳການຫຼືປົດຕຳແໜ່ງ, ການຕິດຕາມກວດກາການປະຕິບັດໜ້າທີ່ຂອງສານປະຊາຊົນແລະສານທະຫານ ໃຫ້ມີຄວາມວ່ອງໄວແລະທັນສະພາບການຕົວຈິງ; ອີງໃສ່ສະພາບຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດຕົວຈິງ ຈຶ່ງມີຄວາມຈຳເປັນຕ້ອງໄດ້ປັບປຸງບາງມາດຕາໃຫ້ມີຄວາມສອດຄ່ອງ ແລະ ກົມກຽວກັນ; ການແຕ່ງຕັ້ງ, ຍົກຍ້າຍ, ສັບປ່ຽນບ່ອນປະຈຳການ ຫຼື ປົດຕຳແໜ່ງ ພະນັກງານສານປະຊາຊົນ ຍັງມີກົນໄກທີ່ບໍ່ລະອຽດຈະແຈ້ງ, ມີບາງອັນຊ້ຳຊ້ອນ ເຮັດໃຫ້ມີປາກົດການແກ້ໄຂບຸກຄະລາກອນ ມີຄວາມຊັກຊ້າ, ແກ່ຍາວ; ການຄຸ້ມຄອງ, ຕິດຕາມກວດກາການປະຕິບັດໜ້າທີ່ແລະການປະພຶດຂອງພະນັກງານຕຸລາການ ຍັງບໍ່ທັນຮັດກຸມ ແລະ ຜ່ານຫຼາຍຂັ້ນຕອນໂດຍບໍ່ສົມເຫດສົມຜົນ.

ທ່ານຮອງປະທານສານປະຊາຊົນສູງສຸດ ຍັງໃຫ້ຮູ້ຕື່ມອີກວ່າ ພາຍຫຼັງກົດໝາຍວ່າດ້ວຍສານປະຊາຊົນ (ສະບັບປັບປຸງ) ໄດ້ຮັບການຮັບຮອງ ແລະ ປະກາດໃຊ້ແລ້ວ ຈະກາຍເປັນເຄື່ອງມືສຳຄັນໃຫ້ສານປະຊາຊົນສູງສຸດ ແລະສານປະຊາຊົນທ້ອງຖິ່ນນຳໃຊ້ເຂົ້າໃນການຄຸ້ມຄອງ, ຕິດຕາມກວດກາການປະຕິບັດໜ້າທີ່ຂອງສານປະຊາຊົນ ໄດ້ຢ່າງມີປະສິດທິພາບ, ຮັບປະກັນໃຫ້ການຕັດສິນ, ພິພາກສາຄະດີ ມີຄວາມວ່ອງໄວ, ໂປ່ງໃສ, ຖືກຕ້ອງ ແລະ ເປັນທຳຍິ່ງຂຶ້ນ; ການແຕ່ງຕັ້ງ, ຍົກຍ້າຍ, ສັບປ່ຽນບ່ອນປະຈຳການ ແລະ ປົດຕຳແໜ່ງພະນັກງານ-ລັດຖະກອນຂອງສານມີຄວາມໂປ່ງໃສ, ຖືກຕ້ອງກັບສະພາບການຕົວຈິງ.

**(ນາງ ກຸກກິກ ບຸດດາໄຊ)**

## ເຊັນສັນຍາສຳປະທານຕິດຕັ້ງຊິງຊັ່ງທັນສະໄໝແລະພັດທະນາສະຖານີຄ່ຽນຖ່າຍສິນຄ້າ ຢູ່ດ່ານສາກົນແດນສະຫວັນ



(ສພຊ) - ພິທີເຊັນສັນຍາສຳປະທານ (CA) ຂອງໂຄງການຕິດຕັ້ງຊິງຊັ່ງທັນສະໄໝ ແລະ ພັດທະນາສະຖານີຄ່ຽນຖ່າຍສິນຄ້າ (Inland Clearance Depot - ICD) ຢູ່ດ່ານສາກົນແດນສະຫວັນ ເມືອງເຊໂປນ ແຂວງສະຫວັນນະເຂດລະຫວ່າງລັດຖະບານແຫ່ງສປປລາວກັບບໍລິສັດ ວິງສະຫວັນ ໂລຈິສຕິກ ຈຳກັດຜູ້ດຽວ, ບໍລິສັດ ດາວສະຫວັນ ຈຳກັດ ແລະ ບໍລິສັດ ທະວີສັກ ການຄ້າ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ ໄດ້ຈັດຂຶ້ນໃນວັນທີ 6 ມິຖຸນາ 2025 ທີ່ນະຄອນຫຼວງວຽງຈັນ ໂດຍການລົງນາມລະຫວ່າງທ່ານ ປອ. ສະຖາບັນດິດ ອິນສີຊຽງໃໝ່ ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ທັງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ກັບ ທ່ານ ວິງສະຫວັນ ວໍລະຈິດ, ທ່ານນາງ ເດືອນດາລາ ວໍລະຈິດ ແລະທ່ານນາງທູນສະຫວັນ ສີຈັນທອງທິບ ຕາງໜ້າ 3 ບໍລິສັດດັ່ງກ່າວ.

ສັນຍາສຳປະທານນີ້ເພື່ອຕິດຕັ້ງຊິງຊັ່ງທັນສະໄໝ ແລະ ພັດທະນາສະຖານີຄ່ຽນຖ່າຍສິນຄ້າ ຢູ່ດ່ານສາກົນແດນສະຫວັນ ເມືອງເຊໂປນ ແຂວງສະຫວັນນະເຂດ ໂດຍນິຕິບຸກຄົນພາກເອກະຊົນເປັນຜູ້ລົງທຶນກໍ່ສ້າງ, ດຳເນີນງານ ແລະ ມອບໂອນ (BOT) ໃຫ້ແກ່ລັດຖະບານ ໃນເວລາສິ້ນສຸດອາຍຸສຳປະທານ 50 ປີ ເຊິ່ງໂຄງການດັ່ງກ່າວ ແມ່ນເອກະຊົນລົງທຶນ 100% ໃນມູນຄ່າ 28,911,240 ໂດລາສະຫະລັດ, ມີເນື້ອທີ່ 34.73 ເຮັກຕາ ຕັ້ງຢູ່ເຂດດ່ານສາກົນແດນສະຫວັນ. ກິດຈະກຳຕົ້ນຕໍປະກອບມີ: ຊັ່ງນ້ຳໜັກລົດບັນທຸກ, ຕູ້ສິນຄ້າ, ສິນຄ້າ; ຄ່ຽນຖ່າຍສິນຄ້າ; ສາງເກັບມ້ຽນສິນຄ້າແບບຄົບວົງຈອນ; ລານເກັບຕູ້ສິນຄ້າ; ບັນຈຸ, ຫຸ້ມຫໍ່, ແຍກ ແລະ ຈັດສົ່ງສິນຄ້າ; ບ່ອນພັກສິນຄ້າ.

**(ກົງທະນູຄຳ ພິພັດເສລີ)**

## ປະຊຸມຮ່ວມບັນດາສະຖານທູດ, ຜູ້ໃຫ້ທຶນແລະຄູ່ຮ່ວມພັດທະນາ ກ່ຽວກັບການຈັດຕັ້ງປະຕິບັດກິດຈະກຳຂອງ ສພຊ ແລະ ສພຂ



(ສພຊ) - ວັນທີ 29 ພຶດສະພາຜ່ານມາ, ສະພາແຫ່ງຊາດ (ສພຊ) ໄດ້ຈັດກອງປະຊຸມຮ່ວມກັບບັນດາສະຖານທູດ, ຜູ້ໃຫ້ທຶນ ແລະຄູ່ຮ່ວມພັດທະນາ ກ່ຽວກັບການຈັດຕັ້ງປະຕິບັດບັນດາກິດຈະກຳຂອງສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ ໂດຍການເປັນປະທານຂອງທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ, ມີບັນດາທ່ານສະມາຊິກສະພາແຫ່ງຊາດ, ຜູ້ຕາງໜ້າຈາກບັນດາສະຖານທູດ, ຜູ້ໃຫ້ທຶນ ແລະຄູ່ຮ່ວມພັດທະນາ ເຂົ້າຮ່ວມ.

ທ່ານ ສັນຍາ ປຣະເສີດ ໄດ້ມີຄຳເຫັນກ່າວເປີດວ່າ: ກອງປະຊຸມຄັ້ງນີ້ ຕ້ອງການທີ່ຈະຊຸກຍູ້ການສົນທະນາແລະການຮ່ວມມືລະຫວ່າງສະຖາບັນລັດຖະສະພາຂອງ ສປປລາວ ກັບ ຄູ່ຮ່ວມງານສາກົນ ກ່ຽວກັບການເສີມສ້າງການປົກຄອງ, ຄວາມສາມາດຂອງສະຖາບັນລັດຖະສະພາ ແລະ ຕ້ອງການທີ່ຈະຮັບປະກັນວ່າ ຂໍ້ລິເລີ່ມການເສີມສ້າງລັດຖະສະພາ ຍັງຄົງສອດຄ່ອງກັບບັນດາເປົ້າໝາຍການພັດທະນາແຫ່ງຊາດ ແລະ ຂອບວຽກທົ່ວໂລກ ລວມທັງ ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ; ແບ່ງປັນຄວາມຄືບໜ້າ ແລະ ບັນດາຍຸດທະສາດທີ່ເປັນບຸລິມະສິດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ໃນຂົງເຂດການພັດທະນານິຕິກຳ, ຕິດຕາມກວດກາ ແລະ ການເຂົ້າຮ່ວມຂອງປະຊາຊົນ, ຮ່ວມກັນຖືເອົາການສະໜັບສະໜູນດ້ານການເງິນ ແລະ ເຕັກໂນໂລຊີໃນປັດຈຸບັນ ຈາກບັນດາຄູ່ຮ່ວມມືສາກົນ.

ທ່ານປະທານກຳມາທິການການຕ່າງປະເທດ ໄດ້ສະແດງຄວາມຂອບໃຈຕໍ່ບັນດາສະຖານທູດ, ຜູ້ໃຫ້ທຶນແລະຄູ່ຮ່ວມມືພັດທະນາ ທີ່ສະໜັບສະໜູນວຽກງານກະກຽມ ແລະ ຜັນຂະຫຍາຍກອງປະຊຸມສະພາສາກົນອາຊຽນ ຄັ້ງທີ 45, ການສະໜັບສະໜູນຈາກແຜນງານໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPS) ຂອງອົງການສະຫະປະຊາຊາດ ໄດ້ເພີ່ມຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ພະນັກງານລັດຖະສະພາ ແລະ 3 ກຳມາທິການຂອງສະພາແຫ່ງຊາດ ເຂົ້າຮ່ວມຢ່າງຕັ້ງໜ້າໃນການກະກຽມ ແລະ ເປັນເຈົ້າພາບກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ45 ໃນເດືອນຕຸລາ2024; ແຜນງານໂຄງການ STEPS ໄດ້ສະໜັບສະໜູນການປຶກສາຫາລື ແລະ ການເຝິກອົບຮົມ 11 ຄັ້ງ ທີ່ນຳພາໂດຍຊ່ຽວຊານພາກພື້ນ ລວມທັງອະດີດເລຂາທິການໃຫຍ່ AIPA 2 ທ່ານ ແລະ ຄະນະເລຂາທິການຂອງ AIPA/Japata.

ທີ່ປະຊຸມໄດ້ຮັບຟັງການລາຍງານຜົນສຳເລັດ, ຄວາມຄືບໜ້າແລະການພັດທະນາອົງກອນຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີII; ໝາກຜົນຂອງການສະໜັບສະໜູນຈາກບັນດາຄູ່ຮ່ວມພັດທະນາ ໃນປີ2024 ຫາເດືອນມັງກອນ 2025; ການນຳສະເໜີ ແລະ ແລກປ່ຽນຄວາມຄິດຄວາມເຫັນຈາກສະພາແຫ່ງຊາດ ປະກອບມີ: ກຳມາທິການແຜນການ, ການເງິນແລະການກວດສອບ, ກຳມາທິການກົດໝາຍ, ກຳມາທິການຍຸຕິທຳ, ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດເພດຍິງ, ສະຖາບັນຄົ້ນຄວ້ານິຕິກຳແລະຈາກສະພາປະຊາຊົນຂັ້ນແຂວງ: ໄຊຍະບູລີ, ບໍລິຄຳໄຊ ແລະ ນະຄອນຫຼວງວຽງຈັນ; ການນຳສະເໜີກ່ຽວກັບກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າສະພາແຫ່ງຊາດ (ICPMS); ການວິເຄາະສະຖານະພາບຕໍ່ກັບການຊ່ວຍເຫຼືອຂອງອົງການຈັດຕັ້ງສາກົນໃຫ້ແກ່ ສພຊ ແລະ ສພຂ. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ສົນທະນາແລກປ່ຽນບົດຮຽນເຊິ່ງກັນແລະກັນ.

**(ສອນສັກ ວັນວິໄຊ)**

## ນັກຮຽນທິດສະດີການເມືອງຂັ້ນຕົ້ນ ຂອງ ສພຊ ທັດສະນະສຶກສາກ່ອນຈົບຫຼັກສູດ



(ສພຊ) - ວັນທີ 4 ມິຖຸນານີ້, ນັກຮຽນທິດສະດີການເມືອງຂັ້ນຕົ້ນ ຊຸດທີ III ຂອງສະພາແຫ່ງຊາດ (ສພຊ) ຈຳນວນ 36 ສະຫາຍ ໄດ້ເຄື່ອນໄຫວທັດສະນະສຶກສາທີ່ອະນຸສອນສະຖານໄກສອນ ພົມວິຫານ ແລະສະຖາບັນການ ເມືອງ-ການປົກຄອງແຫ່ງຊາດ ເຊິ່ງນຳພາໂດຍສະຫາຍ ນາງ ດາວເພັດ ສີຫາວົງ ກຳມະການຄະນະພັກຮາກຖານຄະນະເລຂາທິການສະພາແຫ່ງຊາດ, ຫົວໜ້າກົມການເງິນ.

ຈຸດປະສົງກໍເພື່ອເສີມສ້າງຄວາມຮູ້, ຄວາມເຂົ້າໃຈ ແລະ ປະສົບການການປະຕິບັດວຽກງານຕົວຈິງ ຈາກປະຫວັດສາດການປະຕິວັດແລະແນວຄິດທາງການເມືອງຂອງຊາດ ທັງຍົກລະດັບຄວາມຮູ້ດ້ານລະບົບການປົກຄອງແລະການຈັດຕັ້ງທາງການເມືອງຂອງປະເທດ.

ສະຫາຍ ນາງ ດາວເພັດ ສີຫາວົງ ໄດ້ເນັ້ນໜັກເຖິງຄວາມສຳຄັນຂອງການນຳເອົາທິດສະດີມາໝູນໃຊ້ໃນການປະຕິບັດວຽກງານຕົວຈິງ ແລະ ຄວາມຈຳເປັນຂອງການພັດທະນາຄວາມສາມາດດ້ານການເມືອງຂອງບັນດານັກຮຽນ ເພື່ອປະກອບສ່ວນເຂົ້າໃນວຽກງານສ້າງສາພັດທະນາປະເທດຊາດໃນອະນາຄົດ.

**(ອານຸສອນ ພູມມີທອນ)**

# ຊຸກຍູ້ວຽກງານປັບປຸງກົງຈັກ ສພຂ ຢູ່ເມືອງສິງ ແລະ ເມືອງລອງ



(ສພຂ) - ເພື່ອຮັບປະກັນໃຫ້ວຽກງານປັບປຸງກົງຈັກການຈັດຕັ້ງ ແລະ ກະກຽມຫ້ອງການເຮັດວຽກຂອງກົງຈັກເສນາທິການສະພາປະຊາຊົນແຂວງ (ສພຂ) ຫຼວງນໍ້າທາ ຢູ່ຂັ້ນເມືອງ ໃຫ້ມີຄຸນນະພາບ; ວັນທີ 14-15 ພຶດສະພາຜ່ານມາ, ທ່ານ ຄໍາຟອງ ອິນມານີ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ໄດ້ລົງຕິດຕາມ, ຊຸກຍູ້ວຽກງານປັບປຸງກົງຈັກ ສພຂ ຢູ່ເມືອງສິງ ແລະ ເມືອງລອງ ໂດຍໄດ້ເປີດກອງປະຊຸມເຮັດວຽກຮ່ວມກັບເລຂາ-ຮອງເລຂາພັກເມືອງ, ສະມາຊິກສະພາປະຊາຊົນແຂວງປະຈໍາເຂດເລືອກຕັ້ງເມືອງ ແລະ ຫົວໜ້າຫ້ອງການທີ່ກ່ຽວຂ້ອງ.

ທີ່ກອງປະຊຸມ, ໄດ້ເຜີຍແຜ່ມະຕິຂອງຄະນະປະຈໍາສະພາແຫ່ງຊາດ ສະບັບເລກທີ 162/ຄປຈ, ລົງວັນທີ 02/6/2022 ວ່າດ້ວຍນະໂຍບາຍຕໍ່ສະມາຊິກສະພາແຫ່ງຊາດ ຊຸດທີ IX ແລະ ສະມາຊິກສະພາປະຊາຊົນແຂວງ ຊຸດທີ II ທີ່ເຖິງກະສຽນບໍານານ; ປຶກສາຫາລືກ່ຽວກັບການກະກຽມສ້າງຕັ້ງກົງຈັກເສນາທິການໃຫ້ແກ່ຄະນະສະມາຊິກສະພາປະຊາຊົນແຂວງ (ຄສຂ) ປະຈໍາເຂດເລືອກຕັ້ງເມືອງ, ການປະຈໍາການຂອງຫົວໜ້າ ຄສຂ ປະຈໍາເຂດເລືອກຕັ້ງເມືອງທີ່ໃກ້ຈະໄດ້ຮັບນະໂຍບາຍອຸດໜູນບໍານານ ແລະ ວຽກງານປິ່ນອ້ອມ. ພ້ອມກັນນັ້ນ, ທ່ານ ຄໍາຟອງ ອິນມານີ ຍັງໄດ້ຊຸກຍູ້ 2 ເມືອງສ້າງຕັ້ງຫ້ອງການຕາມຄວາມເໝາະສົມ, ໃຫ້ມີຫ້ອງເຮັດວຽກສະເພາະຂອງຄະນະສະມາຊິກສະພາປະຊາຊົນແຂວງປະຈໍາເຂດເລືອກຕັ້ງເມືອງ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີຄວາມພ້ອມຮອບດ້ານໃນການຈັດຕັ້ງປະຕິບັດໜ້າທີ່.

**(ນາງ ວັນນີ ແຝງບົວວັນ)**

# ສພຂ ຊຽງຂວາງ ແລະ ສະພາປະຊາຊົນເມືອງກີ່ເຊີນ ພົບປະແລກປ່ຽນບົດຮຽນ



(ສພຂ) - ວັນທີ 10 ພຶດສະພາຜ່ານມາທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຊຽງຂວາງ ໄດ້ມີກອງປະຊຸມແລກປ່ຽນບົດຮຽນລະຫວ່າງສະພາປະຊາຊົນແຂວງຊຽງຂວາງແລະສະພາປະຊາຊົນເມືອງກີ່ເຊີນ (Kỳ Sơn) ແຂວງເງະອານ ສສ. ຫວຽດນາມ ເຊິ່ງຝ່າຍລາວນໍາໂດຍສະຫາຍ ວຽງໄຊ ສີວິໄລ ກໍາມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ແລະ ຝ່າຍຫວຽດນາມນໍາໂດຍສະຫາຍ ວີ ແຮ່ (Vi Hoè) ກໍາມະການພັກແຂວງ, ເລຂາພັກເມືອງ, ປະທານສະພາປະຊາຊົນເມືອງກີ່ເຊີນ ເຊິ່ງມີສະຫາຍ ສີວິໄລ ແສງຈະເລີນ ຄະນະປະຈໍາພັກແຂວງ, ຮອງເຈົ້າແຂວງແຂວງຊຽງຂວາງ ເຂົ້າຮ່ວມ.

ສອງຝ່າຍໄດ້ແລກປ່ຽນບົດຮຽນກ່ຽວກັບຫົວຂໍ້: ວຽກງານກົງຈັກການຈັດຕັ້ງຂອງສະພາປະຊາຊົນເມືອງ; ບົດຮຽນການຈັດຕັ້ງຂອງສະພາປະຊາຊົນຂັ້ນຕາແສງໃນເມືອງກີ່ເຊີນ ດ້ານພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາປະຊາຊົນຂັ້ນຕາແສງ; ວຽກງານຕິດຕາມກວດກາຂອງສະພາປະຊາຊົນເມືອງ ແລະສະພາປະຊາຊົນຂັ້ນຕາແສງ; ການສ້າງຄວາມສະດວກດ້ານຕ່າງໆ ລະຫວ່າງສະພາປະຊາຊົນເມືອງ ແລະ ສະພາປະຊາຊົນຂັ້ນຕາແສງ. ສອງຝ່າຍຍັງໄດ້ລາຍງານຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງຕົນໃນໄລຍະຜ່ານມາ ແລະ ປຶກສາຫາລືແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງກົງໄປກົງມາ ເປັນຕົ້ນແມ່ນ: ວຽກງານແຜນພັດທະນາເສດຖະກິດ-ສັງຄົມ; ວຽກງານກົງຈັກການຈັດຕັ້ງ; ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາປະຊາຊົນ; ການຕິດຕາມກວດກາ; ການສ້າງຄວາມສະດວກດ້ານຕ່າງໆ ໃນການກະກຽມກອງປະຊຸມສະໄໝສາມັນແຕ່ລະຄັ້ງ ແລະ ບັນຫາອື່ນໆອີກຈໍານວນໜຶ່ງ ເພື່ອກ້າວໄປສູ່ການຊຸກ ຍູ້ການຮ່ວມມືດ້ານຕ່າງໆຂອງສອງແຂວງ ທັງເປັນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ກໍຄືສອງແຂວງ ຊຽງຂວາງ-ເງະອານ ໃຫ້ນັບມື້ເຂົ້າສູ່ລວງເລິກ ແລະ ເປັນຮູບປະທໍາ.

ໃນໂອກາດມາເຄື່ອນໄຫວວຽກງານຄັ້ງນີ້, ຄະນະຜູ້ແທນສະພາປະຊາຊົນເມືອງກີ່ເຊີນ ໄດ້ທ່ຽວຊົມພູກູດຈອມເຫຼັກ ເຊິ່ງເປັນແຫຼ່ງທ່ອງທ່ຽວທີ່ສໍາຄັນ ແລະ ເປັນສະຖານທີ່ທີ່ມີຄວາມໝາຍຄວາມສໍາຄັນທາງດ້ານປະຫວັດສາດຂອງແຂວງຊຽງຂວາງ.

**(ນາງ ສຸກສະຫວັນ ອິນທະແສງ)**

# ຕິດຕາມກວດກາການແກ້ໄຂຄໍາຮ້ອງຂໍຄວາມເປັນທໍາ



(ສພຂ) - ວັນທີ 13 ພຶດສະພາຜ່ານມາ, ສະພາປະຊາຊົນແຂວງ (ສພຂ) ບໍ່ແກ້ວ ສົມທົບກັບຄະນະສະມາຊິກສະພາປະຊາຊົນແຂວງ (ຄສຂ) ປະຈໍາເຂດເລືອກຕັ້ງເມືອງຕົ້ນເຜິ້ງ ພ້ອມດ້ວຍບັນດາຫ້ອງການທີ່ກ່ຽວຂ້ອງຂອງເມືອງ ໄດ້ລົງຕິດຕາມກວດກາການແກ້ໄຂຄໍາຮ້ອງຂໍຄວາມເປັນທໍາຂອງປະຊາຊົນຢູ່ບ້ານນໍ້າຝາ ໂດຍໄດ້ເປີດກອງປະຊຸມພາຍໃຕ້ການເປັນປະທານຮ່ວມຂອງທ່ານ ພອ. ຫຸມແພງ ອິນທະຈັກ ຮອງປະທານສະພາປະຊາຊົນແຂວງ, ທ່ານ ສາຍຄໍາ ຄໍາປະເສີດປະທານຄະນະກໍາມະການຍຸຕິທໍາ ແລະ ປກຊ-ປກສ ແລະທ່ານ ສຽງສະຫວັນ ຊາພັກດີຮອງປະທານຄສຂປະຈໍາເຂດເລືອກຕັ້ງເມືອງຕົ້ນເຜິ້ງ ເຊິ່ງມີບັນດາທ່ານຜູ້ຕາງໜ້າຈາກຫ້ອງວ່າການເມືອງ, ຫ້ອງການຍຸຕິທໍາ, ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການກະສິກໍາ ແລະ ປ່າໄມ້ ພ້ອມດ້ວຍທີມງານ ສພຂ, ອົງການປົກຄອງ ແລະ ປະຊາຊົນພາຍໃນບ້ານນໍ້າຝາເຂົ້າຮ່ວມທັງໝົດ 43 ຄົນ, ຍິງ 10 ຄົນ.

ທັງນີ້, ກໍເພື່ອຕິດຕາມກວດກາຄໍາຮ້ອງຂໍຄວາມເປັນທໍາທີ່ປະຊາຊົນສະເໜີໄປຫາສະພາປະຊາຊົນແຂວງ ເພື່ອຊ່ວຍພິຈາລະນາແກ້ໄຂການຈ່າຍຄ່າເຊົ່າທີ່ດິນປະຊາຊົນປູກກ້ວຍຫອມ ທີ່ຍັງຄ້າງຈ່າຍໃຫ້ປະຊາຊົນ 10 ຄອບຄົວ, ມີເນື້ອທີ່ດິນເຊົ່າ 18,672 ເຮັກຕາ; ສພຂ ໄດ້ລົງຕິດຕາມກວດກາ ແລະ ເກັບກໍາຂໍ້ມູນຢູ່ບ້ານນໍ້າຝາ 2 ຄັ້ງ, ເຫັນວ່າເພີ່ມຂຶ້ນເປັນ 11 ຄອບຄົວ ລວມທັງໝົດມີ 21 ຄອບຄົວ. ຂໍ້ຂັດແຍ້ງບັນຫາທີ່ດິນຂອງປະຊາຊົນບ້ານນໍ້າຝາ ກັບ ບໍລິສັດປູກກ້ວຍຫອມ ແກ່ຍາວມາເປັນເວລາຫຼາຍປີ, ຜ່ານມາ ສະພາປະຊາຊົນແຂວງບໍ່ແກ້ວ ຊຸດທີ I ໄດ້ສົ່ງໃຫ້ອົງການປົກຄອງເມືອງຕົ້ນເຜິ້ງ ຕັ້ງແຕ່ປີ 2020 ເພື່ອທໍາການແກ້ໄຂໄກ່ເກ່ຍແລ້ວ ແຕ່ເຫັນວ່າປະຊາຊົນກໍຍັງບໍ່ໄດ້ຮັບຄວາມເປັນທໍາ.

ທີ່ກອງປະຊຸມ, ໄດ້ຮັບຟັງການລາຍງານຈາກຫ້ອງການຊັບພະຍາກອນທໍາມະຊາດແລະສິ່ງແວດລ້ອມ ກ່ຽວກັບການແກ້ໄຂຄໍາຮ້ອງຂໍຄວາມເປັນທໍາດັ່ງກ່າວ ແລະ ການຈັດຕັ້ງປະຕິບັດແກ້ໄຂໄກ່ເກ່ຍຂໍ້ຂັດແຍ້ງໃນໄລຍະຜ່ານມາ; ຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ຄົ້ນຄວ້າປະກອບຄໍາເຫັນ ແລະ ຫ້ອງການທີ່ກ່ຽວຂ້ອງ ກໍມີຄໍາເຫັນອະທິບາຍ, ຊີ້ແຈງບັນຫາທີ່ເກີດຂຶ້ນຢ່າງກົງໄປກົງມາ. ໃນຕອນທ້າຍ, ປະທານກອງປະຊຸມໄດ້ຮຽກຮ້ອງບັນດາຫ້ອງການທີ່ກ່ຽວຂ້ອງ ຈົ່ງເຊີດຊູຄວາມຮັບຜິດຊອບໜ້າທີ່ການເມືອງຂອງຕົນສົມທົບກັບອົງການປົກຄອງບ້ານ ເກັບກໍາຂໍ້ມູນຄືນໃໝ່ຢ່າງລະອຽດ ແລ້ວສະເໜີໄປຕາມຂັ້ນຕອນ ເພື່ອຊອກຫາວິທີແກ້ໄຂໃນຕໍ່ໜ້າ ແລະ ທີມງານສະພາປະຊາຊົນແຂວງ ຈະໄດ້ສັງລວມບັນຫາດັ່ງກ່າວລາຍງານຕໍ່ຄະນະປະຈໍາ ສພຂ ເພື່ອຂໍທິດຊີ້ນໍາໃນການຈັດຕັ້ງປະຕິບັດຕໍ່ໄປ.

ວັນທີ 15 ພຶດສະພາ ທີ່ຫ້ອງປະຊຸມຫ້ອງວ່າການເມືອງເມິງ ໄດ້ເປີດກອງປະຊຸມຕິດຕາມກວດກາຄໍາຮ້ອງຂໍຄວາມເປັນທໍາ ໂດຍການເປັນປະທານຮ່ວມຂອງທ່ານ ພອ. ຫຸມແພງ ອິນທະຈັກ ຮອງປະທານສະພາປະຊາຊົນແຂວງ ແລະ ທ່ານ ວັນນາ ຄໍາສີປະເສີດ ຮັກສາການເຈົ້າເມືອງເມືອງເມິງ, ມີທ່ານ ສາຍຄໍາ ຄໍາປະເສີດ ປະທານຄະນະກໍາມະການຍຸຕິທໍາ ແລະ ປກຊ-ປກສ, ບັນດາຫ້ອງການທີ່ກ່ຽວຂ້ອງຂອງເມືອງແລະທີມງານ ສພຂ ເຂົ້າຮ່ວມທັງໝົດ 25 ຄົນ, ຍິງ 8 ຄົນ.

ໃນກອງປະຊຸມ, ໄດ້ຮັບຟັງການລາຍງານກ່ຽວກັບສະພາບການບຸກລຸກຖາງປ່າເຮັດໄຮ່ ແລະ ຈັບຈອງທີ່ດິນຢູ່ເຂດບ້ານນໍ້າຄາລົ້ ແລະ ສະພາບການປຸກລະດົມປະຊາຊົນທີ່ເຂົ້າບຸກລຸກຖາງປ່າຢູ່ເຂດຫ້ວຍນໍ້າຊຸ່ນ (ນໍ້າເມິງນ້ອຍ) ບ້ານນໍ້າຄາລົ້ ເຊິ່ງປະຊາຊົນທີ່ມາບຸກລຸກຂອບເຂດດັ່ງກ່າວ ສ່ວນໃຫຍ່ແມ່ນມາຈາກຕ່າງຖິ່ນ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ປະກອບຄໍາຄິດຄໍາເຫັນ, ເຈາະຈີ້ມກ່ຽວກັບສະພາບບັນຫາການບຸກລຸກປ່າຈັບຈອງເນື້ອທີ່ດິນຢ່າງກົງໄປກົງມາ ແລະ ຊອກຫາວິທີແກ້ໄຂ. ໃນຕອນທ້າຍ, ຄະນະປະທານກອງປະຊຸມ ໄດ້ມີຄໍາເຫັນເນັ້ນໜັກໃຫ້ພາກສ່ວນທີ່ກ່ຽວຂ້ອງ ຈົ່ງສືບຕໍ່ລົງຊຸກຍູ້ປຸກລະດົມປະຊາຊົນທີ່ມາບຸກລຸກຂອບເຂດພື້ນທີ່ດັ່ງກ່າວ ໃຫ້ໄປຕາມຂັ້ນຕອນ ແລະ ຖືກຕ້ອງຕາມລະບຽບການ, ສືບຕໍ່ລົງສົມທົບກັບອົງການປົກຄອງບ້ານເກັບກໍາຂໍ້ມູນຄືນໃໝ່ຢ່າງລະອຽດ ກ່ຽວກັບປະຊາຊົນທີ່ຈະຍົກຍ້າຍມາຕັ້ງຖິ່ນຖານຢູ່ບ່ອນດັ່ງກ່າວ ເນື່ອງຈາກພື້ນທີ່ນີ້ ເປັນເຂດປ່າຫວງຫ້າມຂອງແຂວງ, ຂອງເມືອງ ເຊິ່ງປັດຈຸບັນເຫັນວ່າ ປະຊາຊົນໄດ້ຢຸດເຊົາການຖາງປ່າແລ້ວ ພາກສ່ວນທີ່ກ່ຽວຂ້ອງກໍຕ້ອງຕິດຕາມກວດກາຢ່າງສະໝໍ່າສະເໝີເພື່ອບໍ່ໃຫ້ປະຊາຊົນກັບຄືນໄປຖາງອີກ, ທີມງານສະພາປະຊາຊົນແຂວງ ກໍຈະໄດ້ສັງລວມບັນຫາດັ່ງກ່າວລາຍງານຕໍ່ຄະນະປະຈໍາ ສພຂ ເພື່ອຂໍທິດຊີ້ນໍາໃນການຈັດຕັ້ງປະຕິບັດຕໍ່ໄປ.

**(ດວງຈັນ ທ່ຽງທໍາ)**



## ທົບທວນຄືນການຈັດຕັ້ງປະຕິບັດບົດບັນທຶກຮ່ວມ



(ສພຂ) - ທ້າຍເດືອນເມສາຜ່ານມາ, ສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ໄດ້ຈັດກອງປະຊຸມທົບທວນ ຄືນການຈັດຕັ້ງປະຕິບັດບົດບັນທຶກຮ່ວມກັບພາກສ່ວນກ່ຽວຂ້ອງໃນຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ໂດຍການເປັນປະທານຂອງທ່ານ ໃສຄຳ ທອງລັດກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ເຂົ້າຮ່ວມມີບັນດາທ່ານປະທານ-ຮອງປະທານຄະນະກຳມະການ ແລະ ເລຂາທິການ ສພຂ, ຕາງໜ້າ 10 ພະແນກການ ແລະ ອົງການຂອງແຂວງ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງຂອງ ສພຂ.

ໃນກອງປະຊຸມ, ໄດ້ທົບທວນຄືນການຈັດຕັ້ງປະຕິບັດບົດບັນທຶກການພົວພັນປະສານງານລະຫວ່າງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ຮ່ວມກັບບັນດາພະແນກການ, ອົງການ ເຊິ່ງເຫັນວ່າຫຼາຍວຽກງານໄດ້ຮັບການເອົາໃຈໃສ່ ແລະ ມີຜົນສຳເລັດເປັນຢ່າງດີ ເປັນຕົ້ນແມ່ນການປະສານສົມທົບແລະຂອດການປະສານງານແມ່ນມີຄວາມສະດວກຫຼາຍຂຶ້ນ, ການສະໜອງຂໍ້ມູນມີຄວາມຈະແຈ້ງ, ສາມາດຜັນຂະຫຍາຍມະຕິຕ່າງໆ ແລະ ຖືກຈັດຕັ້ງປະຕິບັດຢ່າງກວ້າງຂວາງ ລົງຮອດຮາກຖານທ້ອງຖິ່ນ; ພ້ອມກັນນັ້ນ, ຜູ້ເຂົ້າຮ່ວມຍັງໄດ້ປຶກສາຫາລື, ສົນທະນາແລກປ່ຽນ, ຖອດຖອນບົດຮຽນ ແລະປະກອບຄຳຄິດຄຳເຫັນ ຕໍ່ຂໍ້ຄົງຄ້າງຈຳນວນໜຶ່ງ ເພື່ອນຳໄປປັບປຸງ, ແກ້ໄຂ ແລະພັດທະນາໃຫ້ດີຂຶ້ນເຮັດໃຫ້ວຽກງານໄດ້ຮັບປະສິດທິຜົນສູງ.

**(ນາງ ໂສລະຢ້າ ໄຊຍະວົງ)**



## ສພຂ ຈຳປາສັກ ແລະ ຢາລາຍ ພົບປະແລກປ່ຽນບົດຮຽນ



(ສພຂ) - ວັນທີ 13 ພຶດສະພາຜ່ານມາ ທີ່ສະພາປະຊາຊົນແຂວງ(ສພຂ)ຢາລາຍ(GIALAI) ສສ.ຫວຽດນາມ ໄດ້ຈັດກອງປະຊຸມພົບປະແລກປ່ຽນບົດຮຽນລະຫວ່າງຄະນະຜູ້ແທນຂັ້ນສູງຂອງ ສພຂ ຢາລາຍ ກັບ ຄະນະຜູ້ແທນຂັ້ນສູງຂອງ ສພຂ ຈຳປາສັກເຊິ່ງນຳໂດຍສະຫາຍ ໂຮ່ ວັນ ນຽນ (Hồ Văn Niên) ກຳມະການສູນກາງພັກກອມມູນິດຫວຽດນາມ, ເລຂາຄະນະບໍລິຫານງານພັກແຂວງ, ປະທານສະພາປະຊາຊົນແຂວງ ແລະ ສະຫາຍ ສາຍທອງ ໄຊຍະວົງຮອງເລຂາຄະນະບໍລິຫານງານພັກແຂວງ, ປະທານສະພາປະຊາຊົນແຂວງ; ທັງນີ້, ກໍເພື່ອເສີມຂະຫຍາຍສາຍພົວພັນຮ່ວມມືພິເສດລະຫວ່າງສອງຊາດລາວ-ຫວຽດນາມ, ຫວຽດນາມ-ລາວ ເວົ້າລວມ, ເວົ້າສະເພາະ ກໍຄືແຂວງຈຳປາສັກກັບແຂວງຢາລາຍ ໃຫ້ຮັດແໜ້ນສາຍພົວພັນຮ່ວມມື, ຄວາມສາມັກຄີຮັກແພງອັນພິເສດ ທີ່ມີມາແຕ່ດົນນານ ທັງຍົກສູງປະສິດທິຜົນຂອງການຮ່ວມມືພັດທະນາຢ່າງຮອບດ້ານລະຫວ່າງສອງແຂວງ.

ໃນການພົບປະ, ສອງຝ່າຍໄດ້ລາຍງານກ່ຽວກັບສະພາບການ, ທີ່ຕັ້ງ, ຈຸດພິເສດຂອງແຂວງ ແລະການເຄື່ອນໄຫວວຽກງານ ກໍຄືການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ວຽກງານຂອງສະມາຊິກສະພາແຫ່ງຊາດ ແລະສະພາປະຊາຊົນແຂວງ ໃຫ້ກັນຊາບ ພ້ອມທັງຜັດປ່ຽນກັນປະກອບຄຳເຫັນ, ແລກປ່ຽນບົດຮຽນຢ່າງລົງເລິກຫຼາຍເນື້ອໃນ ເປັນຕົ້ນການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຂອງອົງການອຳນາດລັດຂັ້ນທ້ອງຖິ່ນ, ການຕິດຕາມກວດກາການຈັດຕັ້ງປະຕິບັດມະຕິແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ, ການແກ້ໄຂຕາມຜົນການກວດສອບ ແລະ ຜົນການກວດກາ, ບັນຫາພົ້ນເດັ່ນໃນສັງຄົມ ແລະ ການຊຸກຍູ້ແກ້ໄຂຜົນການຕິດຕາມກວດກາຂອງ ສພຂ ຢ່າງມີຈຸດສຸມ ແລະ ຖອດຖອນໄດ້ບົດຮຽນຢ່າງເລິກເຊິ່ງ ເພື່ອນຳໄປປັບປຸງແລະນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານໃຫ້ມີປະສິດທິພາບ.

**(ສົມວິຈິດ ໄຊມົນຕີ)**

## ຄະນະຜູ້ແທນ ສພຂ ບໍລິຄຳໄຊ ຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງກວ້າງບິ່ງ



(ສພຂ) - ວັນທີ 19 ພຶດສະພາຜ່ານມາ, ຄະນະຜູ້ແທນສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ນຳໂດຍ ສະຫາຍ ປອ. ສຸວັນນີ ໄຊຊະນະ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ໄດ້ເຂົ້າຮ່ວມກອງປະຊຸມພົບປະແລກປ່ຽນບົດຮຽນຮ່ວມກັບສະພາປະຊາຊົນແຂວງກວ້າງບິ່ງ (Quảng Bình), ສສ.ຫວຽດນາມນຳໂດຍສະຫາຍເຈິ່ນຫ້າຍເຈົາ (Trần Hải Châu) ຮອງເລຂາຜູ້ປະຈຳການພັກແຂວງ, ປະທານສະພາປະຊາຊົນແຂວງກວ້າງບິ່ງ; ມີບັນດາສະຫາຍຄະນະປະຈຳ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານ ສພຂ ທັງສອງຝ່າຍເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ກໍຄືການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສອງສະພາປະຊາຊົນແຂວງ ພ້ອມນີ້, ກໍໄດ້ແລກປ່ຽນບົດຮຽນກ່ຽວກັບວຽກງານ ສພຂ ໃນຫົວຂໍ້: ພາລະບົດບາດການຕົກລົງບັນຫາສຳຄັນຂອງແຂວງ; ການສ້າງຄວາມເຂັ້ມແຂງແລະຂີດຄວາມສາມາດວຽກງານການເປັນເສນາທິການຂອງເລຂາທິການສະພາປະຊາຊົນແຂວງ; ບົດຮຽນໃນການແກ້ໄຂຄຳຮ້ອງຂໍຄວາມເປັນທຳ, ຄຳສະເໜີ ແລະບັນຫາສາຍດ່ວນ ທີ່ສະເໜີຜ່ານສະພາປະຊາຊົນແຂວງ. ສອງຝ່າຍຍັງໄດ້ສະໜອງຂໍ້ມູນກ່ຽວກັບວຽກງານຕາມພາລະບົດຂອງສະພາປະຊາຊົນແຂວງ ແລະ ການບຳລຸງສ້າງພະນັກງານ.

ໃນໂອກາດທີ່ໄປຢ້ຽມຢາມ ແລະ ເຮັດວຽກຄັ້ງນີ້, ຄະນະຜູ້ແທນສະພາປະຊາຊົນແຂວງບໍລິຄຳໄຊ ໄດ້ເຂົ້າຢ້ຽມຂໍ່ານັບສະຫາຍເລຂາພັກແຂວງກວ້າງບິ່ງອີກດ້ວຍ.

**(ນາງ ໂສລະຢ້າ ວົງໄຊຍາ)**

## ສພຂ ຄຳມ່ວນ ຕິດຕາມກວດກາການ ປະເມີນການປະຕິບັດຂໍ້ຕົກລົງເຈົ້າແຂວງ




(ສພຂ) - ວັນທີ 5-8 ແລະ15 ພຶດສະພາຜ່ານມາ, ທ່ານ ບຸນມີ ພິມມະສອນ ປະທານສະພາປະຊາຊົນແຂວງຄຳມ່ວນພ້ອມດ້ວຍບັນດາທ່ານຮອງປະທານ ແລະກຳມະການໃນຄະນະປະຈຳສະພາປະຊາຊົນແຂວງ (ຄປຈ ສພຂ), ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ເກັບກຳຂໍ້ມູນກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງຄຳມ່ວນ ຢູ່ 5 ເມືອງ ຄື: ນາກາຍ, ມະຫາໄຊ, ບົວລະພາ, ຫີນບູນ ແລະ ຄູນຄຳ ໂດຍໄດ້ເປີດກອງປະຊຸມເຮັດວຽກຮ່ວມກັບອົງການປົກຄອງ ເຊິ່ງມີທ່ານຮອງເຈົ້າແຂວງ ຜູ້ຊີ້ນຳວຽກງານຂົງເຂດເສດຖະກິດ, ບັນດາພະແນກການທີ່ກ່ຽວຂ້ອງຂອງແຂວງ, ເລຂາພັກເມືອງ ເຈົ້າເມືອງມະຫາໄຊ ທັງເປັນຫົວໜ້າຄະນະ ສສຂ ປະຈຳເຂດເລືອກຕັ້ງເມືອງ, ເຈົ້າເມືອງບົວລະພາ, ເຈົ້າເມືອງຫີນບູນ, ຮອງເລຂາພັກເມືອງນາກາຍ, ຮອງເຈົ້າເມືອງຄູນຄຳ, ບັນດາທ່ານຄະນະປະຈຳ ແລະກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການທີ່ກ່ຽວຂ້ອງ ແລະ ຕະຫຼອດຮອດແຂກຖືກເຊີນ ເຂົ້າຮ່ວມ.

ໃນກອງປະຊຸມ ໄດ້ຮັບຟັງລາຍງານການຈັດຕັ້ງປະຕິບັດຜົນການປະເມີນຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການຄຸ້ມຄອງສິ່ງເສດເຫຼືອທີ່ມີຜົນກະທົບຕໍ່ສິ່ງແວດລ້ອມຢູ່ແຂວງຄຳມ່ວນ ສະບັບເລກທີ 1163/ຈຂ.ຄມ, ລົງວັນທີ 12 ສິງຫາ 2021; ຈາກນັ້ນ, ກໍໄດ້ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາເພື່ອເປັນຂໍ້ມູນອັນຄົບຖ້ວນ, ຮອບດ້ານ ໃຫ້ແກ່ ຄປຈສພຂ, ສສຂ ນຳໄປວິເຄາະວິໄຈ ແລະ ເປັນຂໍ້ມູນພື້ນຖານໃນການຄົ້ນຄວ້າປະກອບຄຳເຫັນຕໍ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຂ ຊຸດທີ II ທີ່ຈະໄດ້ໄຂຂຶ້ນໃນຕໍ່ໜ້ານີ້.

ທ່ານບຸນມີພິມມະສອນ ໄດ້ມີຄຳເຫັນຕໍ່ທີ່ປະຊຸມເຊິ່ງໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄະນະຮັບຜິດຊອບທີ່ໄດ້ສ້າງແຜນ ແລະ ປະສານສົມທົບເປັນຂົວຕໍ່ໄປຍັງພາກສ່ວນທີ່ກ່ຽວຂ້ອງຂອງເມືອງ ໃນການເຄື່ອນໄຫວຕິດຕາມກວດກາ, ຊຸກຍູ້ວຽກງານໃນຄັ້ງນີ້ ທັງສະແດງຄວາມຂອບໃຈຂະແໜງການທີ່ກ່ຽວຂ້ອງ ທີ່ໄດ້ໃຫ້ການຮ່ວມມືແລະສະໜອງຂໍ້ມູນຮອບ ດ້ານ ເຊິ່ງຈະເປັນຂໍ້ມູນພື້ນຖານອັນສຳຄັນ, ເປັນບ່ອນອີງທີ່ຈະສັງລວມລາຍງານຕໍ່ຄະນະປະຈຳສະພາປະຊາຊົນແຂວງ ພິຈາລະນາ ແລະ ໃຫ້ທິດຊີ້ນຳໃນການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ; ພ້ອມນັ້ນ, ຍັງຮຽກຮ້ອງໃຫ້ທຸກພາກສ່ວນ ເອົາໃຈໃສ່ສຶກສາອົບຮົມ ແລະ ເຜີຍແຜ່ໃຫ້ຖັນແຖວພະນັກງານ ແລະ ປະຊາຊົນເຊື່ອມຊຶມເຂົ້າໃຈແຈ້ງ ແລະ ກຳແໜ້ນຕໍ່ບັນດານິຕິກຳຕ່າງໆ ໃຫ້ເລິກເຊິ່ງ.

ນອກນັ້ນ, ຄະນະຍັງໄດ້ລົງເຄື່ອນໄຫວສອບຖາມ, ສຳພາດປະຊາຊົນແລະລົງກວດກາຢູ່ພາກສະໜາມບ່ອນເກັບມ້ຽນສິ່ງເສດເຫຼືອອີກດ້ວຍ.

**(ເອື້ອ ມະໂນສິງ)**




## ສຳເລັດ...

(ຕໍ່ຈາກໜ້າ 1)

ເພື່ອສ້າງເງື່ອນໄຂໃຫ້ບັນດາທ່ານ ສສຊ ເຂົ້າໃຈບັນດາເນື້ອໃນຂອງເອກະສານທີ່ຈະພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຊ ຊຸດທີ IX ໃຫ້ຈະແຈ້ງ, ສ້າງຄວາມເປັນເອກະພາບຢ່າງສູງຕໍ່ທິດທາງແນວທາງນະໂຍບາຍຂອງພັກ, ລັດ ເພື່ອເຮັດໃຫ້ການປະ ກອບຄຳຄິດຄຳເຫັນຢູ່ກອງປະຊຸມສະໄໝສາມັນເທື່ອທີ 9 ມີລັກສະນະສ້າງສັນ, ແທດຕົວຈິງ, ມີເຫດຜົນ ພ້ອມທັງຊອກຫາວິທີແກ້, ທາງອອກໃຫ້ແກ່ລັດຖະບານ.

ໃນກອງປະຊຸມ, ບັນດາສະມາຊິກສະພາແຫ່ງຊາດ ໄດ້ພ້ອມກັນຄົ້ນຄວ້າປະກອບຄຳເຫັນຢ່າງສ້າງສັນ, ກົງໄປກົງມາ ຕໍ່ບັນດາບົດລາຍງານຂອງລັດຖະບານ ຄື: 1. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2025; 2. ການທາບທາມຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026 -2030); 3. ການຈັດຕັ້ງປະຕິບັດບັນດານະໂຍບາຍ, ນິຕິກຳ ແລະ ກົນໄກຕ່າງໆ ໃນການພັດທະນາພະລັງງານໄຟຟ້ານ້ຳຕົກ; 4. ການໃຫ້ນະໂຍບາຍພິເສດໂຄງການກໍ່ສ້າງ, ສ້ອມແປງເສັ້ນທາງໃນໄລຍະໃໝ່; 5. ການປັບປຸງກົດໝາຍ 3 ສະບັບ ຂຶ້ນເຂດສະພາແຫ່ງຊາດ; 6. ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍປະກັນສັງຄົມ; 7. ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ; 8. ການສ້າງ ແລະ ປັບປຸງກົດໝາຍຈຳນວນໜຶ່ງ ທີ່ຈະສະເໜີຕໍ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຊ ຊຸດທີ IX; 9. ການວິເຄາະບົດບາດການເປັນຕົວແທນຂອງແມ່ຍິງ ແລະ ຄວາມສະເໝີພາບຍິງ-ຊາຍ ພາຍໃນສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ການປະກອບຄຳເຫັນຢ່າງຫຼາກຫຼາຍ, ກົງໄປກົງມາ, ມີລັກສະນະສ້າງສັນ ເພື່ອພ້ອມກັນຊອກຫາວິທີທາງແກ້ໄຂບັນດາບັນຫາທີ່ເຄັ່ງຮ້ອນຂອງປະເທດເຮົາ, ໄດ້ສົມທຽບສະພາບຕົວຈິງ ແລະ ມີຄວາມເປັນເອກະພາບຕໍ່ເນື້ອໃນຕ່າງໆ ທີ່ໄດ້ນຳມາລາຍງານຕໍ່ກອງປະຊຸມຄັ້ງນີ້ເຊິ່ງຈະເປັນຂໍ້ມູນທີ່ສຳຄັນ ແລະ ມີປະໂຫຍດຫຼາຍໃຫ້ບັນດາກະຊວງ, ອົງການທີ່ກ່ຽວຂ້ອງ ເພື່ອນຳໄປຄົ້ນຄວ້າປັບປຸງເນື້ອໃນບັນດາບົດລາຍງານ, ຮ່າງກົດໝາຍໃຫ້ສົມບູນ, ຄົບຖ້ວນ, ຈະແຈ້ງ, ຮັດກຸມ ແລະ ມີຄວາມເປັນເອກະພາບ ກ່ອນຈະນຳເຂົ້າພິຈາລະນາ ແລະ ຮັບຮອງຢູ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX; ຜົນສຳເລັດຂອງກອງປະຊຸມຄັ້ງນີ້ແມ່ນໝາກຜົນຂອງການເສີມຂະຫຍາຍສະຕິປັນຍາ, ຄວາມຮັບຜິດຊອບໜ້າທີ່ການເມືອງຂອງບັນດາສະມາຊິກສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງລັດຖະບານ ສະແດງໃຫ້ເຫັນໝາກຜົນຂອງການປະສານສົມທົບລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບ ລັດຖະບານ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທົ່ວປະເທດ, ລະຫວ່າງຄະນະເລຂາທິການສະພາແຫ່ງຊາດ ກັບ ບັນດາກຳມາທິການ, ສະຖາບັນຄົ້ນຄວ້ານິຕິກຳ ແລະ ຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ.

**(ນາງ ອາລິນ ສຸພົມມະປະດິດ)**



## ສະພາແຫ່ງຊາດ...

(ຕໍ່ຈາກໜ້າ 1)

ວັນທີ 9 ເຖິງວັນທີ 26 ມິຖຸນາ 2025 ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ ໃຊ້ເວລາດຳເນີນກອງປະຊຸມທັງໝົດ 14 ວັນ (ບໍ່ລວມວັນພັກທາງລັດຖະການ) ເຊິ່ງຈະໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ດັ່ງນີ້:

ວຽກງານລັດຖະບານ ມີ 6 ບົດ:

1. ບົດລາຍງານຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2025;

2. ບົດລາຍງານກ່ຽວກັບການທາບທາມຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030);

3. ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດບັນດານະໂຍບາຍ, ນິຕິກຳ, ກົນໄກຕ່າງໆ ໃນການພັດທະນາພະລັງງານໄຟຟ້າ;

4. ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດປີທ່ອງທ່ຽວລາວ ແລະ ທິດທາງແຜນການໃນຕໍ່ໜ້າ;

5. ບົດລາຍງານກ່ຽວກັບຜົນການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍທົ່ວປະເທດ;

6. ບົດລາຍງານການໃຫ້ນະໂຍບາຍພິເສດໂຄງການກໍ່ສ້າງ-ສ້ອມແປງທາງໄລຍະໃໝ່.

ວຽກງານສ້າງ ແລະ ປັບປຸງກົດໝາຍ ມີຈຳນວນ 10 ສະບັບ ໃນນີ້:

ຮ່າງກົດໝາຍສ້າງໃໝ່ 5 ສະບັບ: ກົດໝາຍວ່າດ້ວຍຄວາມປອດໄພໄຊເບີ, ກົດໝາຍວ່າດ້ວຍສັງຄົມສົງເຄາະ, ກົດໝາຍວ່າດ້ວຍພະນັກງານໄອຍະການປະຊາຊົນ, ກົດໝາຍວ່າດ້ວຍສາມັນສຶກສາ, ກົດໝາຍວ່າດ້ວຍການປູກຝັງ; ຮ່າງກົດໝາຍປັບປຸງ 5 ສະບັບ: ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ, ກົດໝາຍວ່າດ້ວຍອາກອນລາຍໄດ້, ກົດໝາຍວ່າດ້ວຍປ້າຍ, ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍຊົນລະປະທານ.

ວຽກງານສະພາແຫ່ງຊາດ ມີ 2 ບົດ:

1. ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 8 ຫາເທື່ອທີ 9 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX;

2. ບົດລາຍງານກ່ຽວກັບການທາບທາມຮ່າງແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ (2026-2030) ຂອງສະພາແຫ່ງຊາດ ຊຸດທີ X.

ມະຕິກອງປະຊຸມສະພາແຫ່ງຊາດ ມີ 17 ສະບັບ ໃນນີ້:

ມະຕິຮັບຮອງເອົາວຽກງານລັດຖະບານ ມີ 6 ສະບັບ:

1. ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2025;

2. ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2025;

3. ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດບັນດານະໂຍບາຍ, ນິຕິກຳ, ກົນໄກຕ່າງໆ ໃນການພັດທະນາພະລັງງານໄຟຟ້າ;

4. ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດປີທ່ອງທ່ຽວລາວ ແລະ ທິດທາງແຜນການໃນຕໍ່ໜ້າ;

5. ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານກ່ຽວກັບຜົນການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍທົ່ວປະເທດ;

6. ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການໃຫ້ນະໂຍບາຍພິເສດໂຄງການກໍ່ສ້າງ-ສ້ອມແປງທາງໄລຍະໃໝ່.

ມະຕິຮັບຮອງເອົາວຽກງານສະພາແຫ່ງຊາດ ມີ 1 ສະບັບ:

1. ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 8 ຫາເທື່ອທີ 9 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX.

ມະຕິວ່າດ້ວຍການຮັບຮອງເອົາຮ່າງກົດໝາຍ ຈຳນວນ 10 ສະບັບ.

ໃນໄລຍະກະກຽມ ແລະ ດຳເນີນກອງປະຊຸມ, ຄະນະເລຂາທິການສະພາແຫ່ງຊາດ ໄດ້ຈັດຕັ້ງໜ່ວຍຮັບຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນ 156 ໃນໂມງລັດຖະການ ເພື່ອຮັບເອົາຄຳຄິດຄຳເຫັນ ແລະ ຄຳສະເໜີໂດຍກົງຈາກປະຊາຊົນທີ່ຈະສົ່ງໄປຍັງກອງປະຊຸມສະພາແຫ່ງຊາດ.

## ຄະນະ...

(ຕໍ່ຈາກໜ້າ 1)

ກອງປະຊຸມແລກປ່ຽນແລະຮຽນຮູ້ເຊິ່ງກັນແລະກັນດ້ານອະລິຍະທຳ ຄັ້ງທີ IV ພາຍໃຕ້ຫົວຂໍ້ "ຊຸກຍູ້ຈິດໃຈເສັ້ນທາງສາຍໄໝ ແລະ ເຕົ້າໂຮມກຳລັງແຮງ ເພື່ອປະຕິບັດບັນດາຂໍ້ລິເລີ່ມອະລິຍະທຳທົ່ວໂລກ" ໂດຍມີຜູ້ແທນຈາກ 60 ກວ່າປະເທດ ທີ່ປະກອບມີຊ່ຽວຊານ, ນັກວິຊາການ, ຫົວໜ້າອົງການຈັດຕັ້ງສາກົນ ແລະ ອົງການບໍ່ຂຶ້ນກັບລັດຖະບານຈາກປະເທດຕ່າງໆ ພ້ອມທັງຜູ້ຕາງໜ້າຈາກພາກສ່ວນທີ່ກ່ຽວຂ້ອງຂອງຈີນ ເຂົ້າຮ່ວມ 400 ທ່ານ. ໃນກອງປະຊຸມ, ທ່ານ ຫານ ເຈິງ ຮອງປະທານປະເທດຈີນ ໄດ້ຍົກໃຫ້ເຫັນຄວາມສຳຄັນຂອງອະລິຍະທຳທີ່ມີຄວາມແຕກຕ່າງ ແລະ ຮຽກຮ້ອງໃຫ້ບັນດາປະເທດ ແລະ ຜູ້ເຂົ້າຮ່ວມຈົ່ງແລກປ່ຽນ, ຮ່ຳຮຽນເຊິ່ງກັນແລະກັນ, ຍຶດໝັ້ນກັບຍຸກສະໄໝ, ຍຶດໝັ້ນນະວັດຕະກຳ, ຄົ້ນຄວ້າມູນຄ່າປະຫວັດສາດ ແລະ ວັດທະນະທຳຂອງປະເທດຕ່າງໆ, ຊຸກຍູ້ການຫັນປ່ຽນຢ່າງມີຫົວຄິດປະດິດສ້າງ, ພັດທະນາວັດທະນະທຳພື້ນເມືອງອັນດີເລີດຂອງປະເທດຕ່າງໆ, ມີການສົນທະນາຢ່າງຈິງໃຈ, ຮ່ວມມືຕ່າງຝ່າຍມີຜົນປະໂຫຍດ, ລຶບລ້າງສິ່ງກີດຂວາງ ແລະ ຄວາມເຂົ້າໃຈຜິດ ໂດຍການສົນທະນາ ແລະ ການສື່ສານ, ເພີ່ມທະວີຄວາມເຫັນດີເຫັນພ້ອມທີ່ເປັນມູນເຊື້ອ, ຊຸກຍູ້ການຢູ່ຮ່ວມກັນຢ່າງກົມກຽວກັນຂອງອະລິຍະທຳທີ່ແຕກຕ່າງກັນ, ເພີ່ມທະວີຄວາມເຂົ້າໃຈ ແລະ ຄວາມຮັກແພງຂອງປະຊາຊົນ ເພື່ອພ້ອມກັນສ້າງອະນາຄົດທີ່ດີກວ່າຂອງມະນຸດ.

ທ່ານ ສົມມາດ ພົລເສນາ ໄດ້ມີຄຳເຫັນໃນກອງປະຊຸມ ເຊິ່ງມີເນື້ອໃນວ່າ: ໃນໂລກ ມີຄວາມຫຼາກຫຼາຍທາງດ້ານອະລິຍະທຳ ແລະ ມີຄວາມແຕກຕ່າງກັນຢູ່ ເຊິ່ງແຕ່ລະອະລິຍະທຳ ລ້ວນແຕ່ມີຄວາມໝາຍ ແລະ ຄຸນຄ່າສະເພາະ; ອະລິຍະທຳເປັນສີສັນ, ອະລິຍະທຳແມ່ນຄວາມອຸດົມສົມບູນທີ່ໄດ້ມາຈາກການແລກປ່ຽນ, ການຮຽນຮູ້ ແລະ ພັດທະນາເຊິ່ງກັນແລະກັນ; ການພັດທະນາ ແລະ ສ້າງຄວາມກົມກຽວດ້ານອະລິຍະທຳຂອງມະນຸດ ແມ່ນວິທີທີ່ເຮັດໃຫ້ໂລກມີຄວາມສວຍງາມ, ມີຄວາມສະເໝີພາບ, ມີຄວາມສະຫງົບສຸກ, ມີການພັດທະນາ ແລະ ເຮັດໃຫ້ປະຊາຊົນມີຊີວິດການເປັນຢູ່ດີຂຶ້ນ. ພ້ອມນັ້ນ, ຍັງໄດ້ຊົມເຊີຍ ສປຈີນ ທີ່ໄດ້ສະເໜີຂໍ້ລິເລີ່ມ 3 ດ້ານ ໂດຍສະເພາະຂໍ້ລິເລີ່ມອະລິຍະທຳໃນທົ່ວໂລກໃນປີ 2023. ປະຊາຊົນລາວເຄີຍມີມູນເຊື້ອໂອບເອື້ອອາລີ, ອ່ອນນ້ອມຖ່ອມຕົນ ແລະ ຊ່ວຍເຫຼືອເຊິ່ງກັນແລະກັນມາແຕ່ບູຮານນະການ ຍິນດີ ແລະ ພ້ອມຈະຮ່ວມມືກັບທຸກປະເທດຕາມເງື່ອນໄຂຂອງຕົນ ໂດຍສະເພາະກັບ ສປຈີນ ໃນການປະຕິບັດຂໍ້ລິເລີ່ມອະລິຍະທຳທົ່ວໂລກ, ເປີດກວ້າງການແລກປ່ຽນ ແລະ ການຮ່ວມມືດ້ານວັດທະນະທຳຫຼາຍຮູບຫຼາຍແບບ, ຊຸກຍູ້ສົ່ງເສີມການສົນທະນາ, ສ້າງກົນໄກປະຕິບັດຂໍ້ລິເລີ່ມອະລິຍະທຳໂລກ, ຊຸກຍູ້ການຢູ່ຮ່ວມກັນຢ່າງກົມກຽວກັນບົນພື້ນຖານຄວາມສະເໝີພາບ ແລະ ຄວາມເຂົ້າໃຈເຊິ່ງກັນແລະກັນ ເພື່ອນຳເອົາຜົນປະໂຫຍດມາສູ່ປະຊາຊົນ.

ນອກຈາກເຂົ້າຮ່ວມກອງປະຊຸມ, ຄະນະຜູ້ແທນຍັງໄດ້ພົບປະສອງຝ່າຍກັບສະມາຄົມເພື່ອການແລກປ່ຽນສາກົນແຫ່ງປະເທດຈີນ; ພົບປະກັບການນຳແຂວງການຊູ, ແຂວງຊານຊີ, ເມືອງຕຸນຮວາງ ແລະ ນະຄອນເຈຍຢູກວານ. ການພົບປະແຕ່ລະບ່ອນ, ສອງຝ່າຍ ລ້ວນແຕ່ໄດ້ຕີລາຄາການພົວພັນຮ່ວມມືລະຫວ່າງສອງປະເທດ ລາວ-ຈີນ ໃນໄລຍະຜ່ານມາ, ແລກປ່ຽນສະພາບອັນພົ້ນເດັ່ນ ແລະ ການພັດທະນາ ໃຫ້ກັນຊາບ ພ້ອມທັງປຶກສາຫາລືການພົວພັນຮ່ວມມືໃນດ້ານທີ່ສອງຝ່າຍມີທ່າແຮງ ແລະ ມີຄວາມສົນໃຈນຳກັນ. ພ້ອມນັ້ນ, ຍັງໄດ້ຢ້ຽມຊົມສະຖານທີ່ທ່ອງທ່ຽວທາງປະຫວັດສາດ, ວັດທະນະທຳ ແລະ ທັດສະນະສຶກສາກ່ຽວກັບບົດຮຽນດ້ານກະສິກຳຈຳນວນໜຶ່ງ.

ການເຂົ້າຮ່ວມກອງປະຊຸມ ແລະ ຢ້ຽມຢາມໃນຄັ້ງນີ້, ນອກຈາກເປັນການປະກອບສ່ວນການແລກປ່ຽນອະລິຍະທຳແລ້ວ ຍັງເປັນການປະກອບສ່ວນສຳຄັນໃນການເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ລາວ-ຈີນ ໃຫ້ນັບມື້ກ້າວເຂົ້າສູ່ລວງເລິກ ແລະ ນຳເອົາຜົນໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ.

**(ຄະນະພົວພັນຕ່າງປະເທດ ສູນກາງພັກ)**




# ບົດບາດສາສະໜາກັບສັງຄົມລາວ

\# ດົ້ນກົບເມກ

ຕົກມາຮອດປັດຈຸບັນນີ້ ຖືວ່າສັງຄົມລາວໄດ້ຮັບຮູ້ຫຼາຍຂຶ້ນກ່ຽວກັບບົດບາດສາສະໜາພຸດ ຄື ພະສົງຕໍ່ສັງຄົມລາວ, ແຕ່ກໍອາດຍັງມີຈຳນວນໜ້ອຍທີ່ຈະເຂົ້າໃຈເລິກເຊິ່ງເຖິງແກ່ນແທ້ວ່າ ພະສົງໄດ້ເສຍສະຫຼະອຸທິດຕົນເພື່ອຊາດ ແລະ ສັງຄົມມີຄືແນວໃດແທ້? ຜູ້ຂຽນຂໍເວົ້າເຖິງບົດບາດພະສົງທີ່ມີສ່ວນຮ່ວມໃນຂະບວນການປະຕິວັດ ຄືພາລະກິດຂອງຊາດເຊິ່ງຍາມໃດພະສົງກໍຖືຕົນເອງວ່າເປັນລູກຫຼານຂອງປະຊາຊົນ, ເມື່ອຊາດປອດໄພ ພະສົງ ແລະ ສາສະໜາກໍປອດໄພ ຖ້າຊາດມີເສິກສົງຄາມ ສາສະໜາກໍຢູ່ໄດ້ຍາກ; ດັ່ງນັ້ນ, ຊາດ ແລະ ສາສະໜາ ຈຶ່ງຕັດຂາດອອກຈາກກັນບໍ່ໄດ້.

ປະຫວັດສາດໄດ້ຢັ້ງຢືນແຈ້ງແລ້ວວ່າຍາມຊາດມີໄພ ພະສົງລາວ ກໍໄດ້ປະກອບສ່ວນສຳຄັນຕໍ່ພາລະກິດຊາດຄືດັ່ງໃນຂະບວນການປະຕິວັດທີ່ມີພະສົງຈຳນວນຫຼາຍ ໄດ້ອຸທິດຕົນປະກອບສ່ວນເຫື່ອແຮງ-ສະຕິປັນຍາ ຍົກຕົວຢ່າງ: ບັນດາພະສົງໃນແຕ່ລະທ້ອງຖິ່ນຕ່າງແຂວງ ແລະ ນະຄອນຫຼວງວຽງຈັນ ຊຸມປີ 1945-1975 ເຊິ່ງໃນຊຸມປີ 1945-1960 ການເມືອງລາວເຄັ່ງຮ້ອນສັບສົນຂ້ຽວຂາດຮຸນແຮງ ພະສົງບາງອົງ, ບາງກຸ່ມກໍຖືກດຶງດູດເຂົ້າໃນວົງໂຄຈອນການເມືອງ. ໃນວຽງຈັນມີພະອາຈານ ບົວຄຳ ວໍລະເພັດ, ພະອາຈານ ມະຫາປານ ອານັນໂທ, ພະອາຈານ ປີຊາ ສຸທຳມະໂກສານ, ມະຫາ ຄຳຕັນ ເທບບົວລີ, ມະຫາ ທອງຄູນ ອະນັນຕະສຸນທອນ, ມະຫາ ວິຈິດ ສິງຫະລາດ. ມາເຖິງຊຸມປີ 1958 ຈຶ່ງໄດ້ຕົກລົງສ້າງຕັ້ງອົງການພຸດທະສາສະໜາສຳພັນລາວຂຶ້ນ ທີ່ວັດທາດຝຸ່ນ ເພື່ອໃຫ້ມີການຈັດຕັ້ງເຄື່ອນໄຫວຊັດເຈນ ພາຍໃຕ້ການຊີ້ນຳຂອງແນວລາວຮັກຊາດ, ແຕ່ສຸດທ້າຍຮອດປີ 1960 ອົງການນີ້ ທີ່ມີການນຳພະສົງ ສິ່ງສຳຄັນພ້ອມດ້ວຍສະມາຊິກ ກໍໄດ້ຕັດສິນໃຈກ້າວຂຶ້ນໄປສູ່ເຂດທີ່ໝັ້ນປະຕິວັດ ເຮັດໜ້າທີ່ເຜີຍແຜ່ເທດສະໜາອົບຮົມປະຊາຊົນ ໃຫ້ເຂົ້າໃຈແນວທາງສັນຕິພາບຂອງຊາດ ໂດຍນຳເອົາສິນທຳພຸດທະສາສະໜາ ປະສົມສອດຄ່ອງກັບແນວທາງການເມືອງຂອງພັກ ແລະ ແນວລາວຮັກຊາດ.

ປີ 1976 ຄະນະສົງລາວ ໄດ້ເປີດກອງປະຊຸມໃຫຍ່ເລືອກຕັ້ງຄະນະບໍລິຫານຂອງຕົນຈະແຈ້ງຊັດເຈນ ເພື່ອໃຫ້ສອດຄ່ອງກັບກົນໄກບໍລິຫານຂອງລັດ ດຳເນີນການໜ້າທີ່ວຽກງານຍາວນານຄຽງຄູ່ຊາດ, ອາທິດຜ່ານມານີ້ ປະທານ ອ.ພ.ສ ສູນກາງ ອົງທີ 6 ໄດ້ມໍລະນະພາບ-ປົງສັບ. ຄະນະຈັດຕັ້ງພິທີ ກໍໄດ້ອ່ານປະຫວັດເພິ່ນຊັດເຈນ ທີ່ໄດ້ປະກອບສ່ວນສຳຄັນແກ່ພາລະກິດການປະຕິວັດແຕ່ເພິ່ນຍັງໜຸ່ມນ້ອຍ.

ດັ່ງນັ້ນ, ບົດບາດພະສົງຕໍ່ສັງຄົມລາວແມ່ນໄປຄຽງຄູ່ກັນ, ບໍ່ສາມາດຕັດແຍກຈາກກັນໄດ້, ມີຊາດກໍມີສາສະໜາພະສົງກໍແມ່ນລູກປະຊາຊົນເພິ່ນຈຶ່ງອຸທິດຕົນເພື່ອຊາດບ້ານເມືອງ.




# ວິທີເຮັດວຽກ

**ພາກທີ 7**

**ບັນຫາພະນັກງານ**

ຖ້າຫາກວ່າປ່ອຍໃຫ້ຂໍ້ບົກພ່ອງຜິດພາດກາຍເປັນອັນໃຫຍ່ ແລ້ວຈຶ່ງເອົາອອກມາຕີບາດໜຶ່ງ, ນັ້ນທໍ່ກັບດ່າຕີພະນັກງານເຮົາ. ພະນັກງານທີ່ຖືກຕີແນວນັ້ນເສຍນໃຈເຊື່ອຕົນເອງໄປໝົດ, ຄົນຂະຫຍັນຫ້າວຫັນກໍກາຍເປັນຄົນອຸກໃຈ, ກາຍອຸກໃຈກໍ່ເປັນຄົນໃຊ້ບໍ່ໄດ້, ເພາະສະນັ້ນຖ້າຫາກເຫັນພະນັກງານຜູ້ໃດຜິດພາດກໍ່ຕ້ອງ ຮີບແກ້ໄຂໂລດ. ຖ້າເຫັນວ່າວຽກທີ່ຈະຕ້ອງເຮັດນັ້ນໃຫຍ່ໂພດເຮັດ ບໍ່ລ້ອນກໍ່ໃຫ້ປ່ຽນເອົາວຽກທີ່ເໝາະສົມນັ້ນມາໃຫ້ເຂົາເຈົ້າເຮັດ, ແຕ່ ວ່າການປ່ຽນວຽກດັ່ງນັ້ນກໍ່ບໍ່ຄວນເຮັດໃຫ້ເຂົາເຈົ້າຮູ້ວ່າ: ເປັນຍ້ອນເຂົາເຈົ້າເຮັດບໍ່ລ້ອນຈຶ່ງປ່ຽນແນວນັ້ນ. ນັ້ນແມ່ນເຮັດເພື່ອຮັກສານ ໃຈຫ້າວຫັນຂອງເຂົາເຈົ້າບໍ່ໃຫ້ເຂົາເຈົ້າອຸກໃຈ.

ງ) ຮັກແພງພະນັກງານ: ບໍ່ແມ່ນວ່າສອງສາມເດືອນ ຫຼື ສອງສາມປີພວກເຮົາຈະສ້າງໄດ້ພະນັກງານດີຜູ້ໜຶ່ງ. ມັນຕ້ອງມີ ການວຽກເຮັດການຕໍ່ສູ້ ແລະ ອົບຮົມຫຼາຍປີຈຶ່ງຈະສ້າງພະນັກງານໄດ້. ແຕ່ວ່າໃນເວລາເຮັດການຕໍ່ສູ້ພວກເຮົາຊຸພັດມັກເສຍພະນັກງານໄປງ່າຍທີ່ສຸດ. ເພາະສະນັ້ນພັກຕ້ອງຮັກແພງພະນັກງານ. ແຕ່ວ່າຮັກແພງບໍ່ແມ່ນອູ້ມຫອບເອົາໃຈ ແລະ ປະປ່ອຍຕາມແຕ່ມັນຈະ ເປັນແນວໃດ. ຮັກແພງແມ່ນຊ່ວຍເຫຼືອໃຫ້ຮ່ຳຮຽນຕື່ມ, ກ້າວໜ້າຕື່ມ, ຊ່ວຍເຂົາເຈົ້າແກ້ໄຂບັນຫາຫຍຸ້ງຍາກໃນຊີວິດ, ໃນເວລາທຳມະດາ, ກໍໃຫ້ເຂົາເຈົ້າມີຄວາມສະບາຍໃຈ, ເວລາເຈັບປ່ອຍກໍ່ໃຫ້ມີການເບິ່ງແຍງວ່າໃຫ້ຄອບຄົວຂອງເຂົາເຈົ້າທຸກຍາກເດືອດແຄ້ນ.

ອ່ານຕໍ່ສະບັບໜ້າ...

## ສານ...

(ຕໍ່ຈາກໜ້າ 1)

ນິດວັນທີ 1 ມິຖຸນາ ເປັນວັນປູກຕົ້ນໄມ້ແຫ່ງຊາດ ນັບແຕ່ປີ 1980 ເປັນຕົ້ນມາ ເພື່ອສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນ ແລະ ຄວາມເອົາໃຈໃສ່ຂອງພັກ-ລັດ ໃນການສົ່ງເສີມການພັດທະນາແບບຍືນຍົງ ຜ່ານການປົກປ້ອງສິ່ງແວດລ້ອມ ແລະ ການລົງທຶນໃນອະນາຄົດຂອງຊາດ ຄືເດັກທຸກຄົນ, ພ້ອມທັງເປັນການສອນໃຫ້ເດັກເຂົ້າໃຈຄວາມສຳຄັນຂອງສິ່ງແວດລ້ອມ ແລະ ຄວາມຮັບຜິດຊອບຕໍ່ສັງຄົມ.

ໃນນາມຕາງໜ້າການນຳພັກ-ລັດແລະໃນນາມສ່ວນຕົວຂ້າພະເຈົ້າຂໍສົ່ງພອນໄຊອັນປະເສີດ, ຄວາມຮັກແພງ, ຄວາມເປັນຫ່ວງເປັນໄຍ ແລະ ຂໍຝາກຄວາມຢ້ຽມຢາມຖາມຂ່າວອັນອົບອຸ່ນມາຍັງລູກຫຼານ, ເຍົາວະຊົນ ແລະ ອະນຸຊົນລາວບັນດາເຜົ່າທຸກຖ້ວນໜ້າ ທີ່ດຳລົງຊີວິດຢູ່ທັງພາຍໃນ ແລະ ຕ່າງປະເທດ ຈົ່ງມີແຕ່ຄວາມສຸກ, ຄວາມຈະເລີນກ້າວໜ້າ, ມີສຸຂະພາບສົມບູນແຂງແຮງ, ມີຄວາມສີວິໄລທາງຮ່າງກາຍ, ຈິດໃຈ, ສະຕິປັນຍາ, ເປັນເດັກຄຳຮູ້, ເປັນເດັກດີ, ເປັນເດັກເກັ່ງ-ເດັກສະຫຼາດ, ມີຄວາມຮັບຜິດຊອບ, ມີລະບຽບວິໄນ, ມີຄວາມຊື່ສັດ, ກ້າຄິດ-ກ້າສະແດງອອກໃນທາງທີ່ສ້າງສັນ, ມີທັດສະນະຄະຕິທາງບວກ ແລະ ສ້າງຄຸນຄ່າສຳຄັນໃຫ້ຕົວເອງດ້ວຍການສະແຫວງຫາຄວາມຮູ້, ເພີ່ມທັກສະ ແລະ ການຮຽນຮູ້ສິ່ງໃໝ່ໆຢູ່ຕະຫຼອດເວລາ, ມີອະນາຄົດທີ່ສົດໃສຍືນຍົງ, ກ້າວທັນການປ່ຽນແປງຂອງຍຸກສະໄໝໃນໂລກ ແລະ ຮ່ວມກັນສະເຫຼີມສະຫຼອງວັນເດັກສາກົນວັນທີ 1 ມິຖຸນາ 2025 ຢ່າງເບີກບານມ່ວນຊື່ນແລະເປັນຂະບວນຟົດຟື້ນ ພາຍໃຕ້ຄຳຂວັນທີ່ວ່າ "ສ້າງຄວາມເຂັ້ມແຂງໃຫ້ເດັກທຸກຄົນ: ສິດທິເທົ່າທຽມກັນ, ອະນາຄົດທີ່ປອດໄພ".

ວັນເດັກສາກົນ ວັນທີ 1 ມິຖຸນາ ໄດ້ເລີ່ມຕົ້ນຂຶ້ນປີ 1925 ໃນກອງປະຊຸມໂລກພາຍໃຕ້ຫົວຂໍ້: ເພື່ອຄວາມຢູ່ດີກິນດີຂອງເດັກ (world conference well-being for children) ເຊິ່ງຈັດຂຶ້ນທີ່ນະຄອນເຈນີວາ, ປະເທດສະວິດ ຈຸດປະສົງເພື່ອສົ່ງເສີມສິດທິເດັກແລະຄຸ້ມຄອງຄວາມປອດໄພຂອງເດັກ; ຕໍ່ມາໃນປີ 1950 ວັນທີ 1 ມິຖຸນາ ໄດ້ຖືກກຳນົດໃຫ້ເປັນວັນເດັກສາກົນ ເຊິ່ງຫຼາຍປະເທດໄດ້ມີການຈັດຕັ້ງສະເຫຼີມສະຫຼອງວັນດັ່ງກ່າວ ເພື່ອສະແດງເຖິງຄວາມເອົາໃຈໃສ່ຕໍ່ສິດທິຂອງເດັກ, ການມີສ່ວນຮ່ວມ, ການສ້າງຄວາມເຂັ້ມແຂງແລະຄວາມເປັນຢູ່ທີ່ດີໃຫ້ເດັກ, ເປີດໂອກາດ ແລະ ສະໜັບສະໜູນໃຫ້ເດັກ ໄດ້ມີໂອກາດສະແດງພອນສະຫວັນ, ທ່າແຮງບົ່ມຊ້ອນ, ຂີດຄວາມສາມາດແລະການຮັບຟັງສຽງຂອງເດັກອີກດ້ວຍ. ການສະເຫຼີມສະຫຼອງວັນດັ່ງກ່າວ ຍັງເປັນການໂຄສະນາປູກຈິດສຳນຶກໃຫ້ຄອບຄົວ, ບຸກຄົນສຳຄັນ ແລະສັງຄົມຮັບຮູ້ໄດ້ທັດສະນະ, ແນວຄວາມຄິດ ແລະ ບັນຫາທີ່ເປັນຜົນກະທົບກັບເດັກ ທັງເປັນການເຕືອນຄືນອີກຄັ້ງເຖິງຄວາມສຳຄັນຂອງການລົງທຶນໃສ່ເດັກ, ການສ້າງສະພາບແວດລ້ອມທີ່ເປັນມິດ ແລະ ການສ້າງຄວາມເຂັ້ມແຂງໃຫ້ເດັກທາງດ້ານການສຶກສາ, ການຮັກສາສຸຂະພາບ, ໂພຊະນາການ, ສຸຂະອະນາໄມ, ຂໍ້ມູນຂ່າວສານ ແລະ ການປົກປ້ອງເດັກຈາກທຸກຮູບແບບຂອງຄວາມຮຸນແຮງ, ການກະທຳສິ່ງລາມົກອະນາຈານຕໍ່ເດັກ, ການລ່ວງລະເມີດ, ການຂູດຮີດທາງເພດຜ່ານສື່ອອນລາຍ ແລະ ການກະທຳອື່ນໆ ທີ່ສົ່ງຜົນກະທົບຕໍ່ເດັກໃນທາງກົງ ແລະ ທາງອ້ອມ ເພື່ອຮັບປະກັນໃຫ້ເດັກທຸກຄົນມີອະນາຄົດສົດໃສ, ຊີວິດມີຄຸນນະພາບ ແລະ ມີຄຸນຄ່າຕໍ່ສັງຄົມແລະປະເທດຊາດ.

ໃນຊຸມປີທີ່ຜ່ານມາ, ພັກ ແລະ ລັດຖະບານແຫ່ງ ສປປລາວ ໄດ້ເອົາໃຈໃສ່ ແລະ ໃຫ້ຄວາມສຳຄັນການປົກປ້ອງສິດແລະຜົນປະໂຫຍດຂອງເດັກຢ່າງຮອບດ້ານ ດ້ວຍການວາງນະໂຍບາຍ ແລະ ອອກກົດໝາຍຈຳນວນໜຶ່ງເພື່ອເປັນເຄື່ອງມືປົກປ້ອງເດັກຢ່າງເຕັມສ່ວນ ໂດຍສະເພາະໄດ້ກຳນົດຫ້າມການລົງໂທດທາງດ້ານຮ່າງກາຍດ້ວຍການຂ້ຽນຕີ ເຂົ້າໃນກົດໝາຍວ່າດ້ວຍການປົກປ້ອງສິດແລະຜົນປະໂຫຍດຂອງເດັກ ເຊິ່ງຖືເປັນປະເທດທີ 66 ຂອງໂລກ ແລະ ເປັນປະເທດທຳອິດໃນອາຊຽນ. ໃນປີ 2024 ກໍໄດ້ເປັນເຈົ້າພາບຈັດເວທີເດັກອາຊຽນ ຄັ້ງທີ 8 ເຊິ່ງມີຕົວແທນເດັກຈາກບັນດາປະເທດສະມາຊິກອາຊຽນເຂົ້າຮ່ວມ ໄດ້ຮ່ວມກັນອອກຖະແຫຼງການເດັກອາຊຽນ "ເດັກມີສ່ວນຮ່ວມປະຕິບັດແຜນງານປ່ຽນແປງດິນຟ້າອາກາດ ເພື່ອສ້າງຄວາມເຂັ້ມແຂງປະຊາຄົມອາຊຽນ" ສະເໜີຕໍ່ກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນດ້ານສະຫວັດດີການສັງຄົມ ແລະ ການພັດທະນາຕາມລະບຽບການ. ນອກຈາກນັ້ນ, ຕົວແທນເດັກລາວກໍໄດ້ຮ່ວມປຶກສາຫາລືແລະປະກອບຄຳເຫັນຕໍ່ຄຳເຫັນທົ່ວໄປເລກທີ 27 ກ່ຽວກັບສິດທິຂອງເດັກ ໃນການເຂົ້າເຖິງຂະບວນການຍຸຕິທຳ ແລະ ການແກ້ໄຂທີ່ມີປະສິດທິຜົນ; ຕົວແທນເດັກລາວຍັງໄດ້ຮ່ວມຄົ້ນຄວ້າປຶກສາຫາລືແລະປະກອບຄຳເຫັນກ່ຽວກັບການທົບທວນທ້າຍສະໄໝການຈັດຕັ້ງປະຕິບັດແຜນປະຕິບັດງານລະດັບພາກພື້ນອາຊຽນ ເພື່ອລຶບລ້າງການໃຊ້ຄວາມຮຸນແຮງຕໍ່ເດັກ ແລະ ຮ່າງແຜນໄລຍະປີ 2026-2035, ພ້ອມທັງໄດ້ຄັດເລືອກເອົາຕົວແທນເດັກລາວ ຈຳນວນ 3 ນ້ອງ ເຂົ້າຮ່ວມກອງປະຊຸມປຶກສາຫາລືການສ້າງຮ່າງແຜນປະຕິບັດງານລະດັບພາກພື້ນອາຊຽນ ເພື່ອລຶບລ້າງຄວາມຮຸນແຮງຕໍ່ເດັກຮ່ວມກັບບັນດາຕົວແທນເດັກປະເທດສະມາຊິກອາຊຽນ.

ຄຽງຄູ່ກັບຜົນສຳເລັດ ແລະ ຄວາມເອົາໃຈໃສ່ຢ່າງຕັ້ງໜ້າຂອງພັກ ແລະ ລັດຖະບານແຫ່ງ ສປປລາວ ໃນການສົ່ງເສີມສິດທິເດັກ ແລະ ສະພາບຄວາມເປັນຢູ່ທີ່ດີຂອງເດັກ ລວມທັງການມີສ່ວນຮ່ວມຂອງເດັກດັ່ງກ່າວມານັ້ນ. ພວກເຮົາເຫັນວ່າບັນດາລູກຫຼານ, ເຍົາວະຊົນແລະອະນຸຊົນລາວທັງຫຼາຍ ຍັງຜະເຊີນໜ້າກັບສິ່ງທ້າທາຍແລະຜົນກະທົບຫຼາຍດ້ານ ເປັນຕົ້ນ ຄວາມທຸກຍາກຂອງເດັກ, ການໃຊ້ຄວາມຮຸນແຮງຕໍ່ເດັກ, ການຂູດຮີດ, ການສະແຫວງຫາຜົນປະໂຫຍດ, ການໃຊ້ແຮງງານເດັກ, ການຄ້າປະເວນີເດັກ, ຄວາມປອດໄພທາງອິນເຕີເນັດ-ການນຳໃຊ້ສື່ສັງຄົມອອນລາຍ, ການອອກໂຮງຮຽນ, ການແຕ່ງດອງແຕ່ອາຍຸຍັງນ້ອຍ, ການແຕ່ງດອງແອບແຝງ, ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ, ບັນຫາໄພສັງຄົມ ແລະບັນຫາຢາເສບຕິດ; ນອກຈາກນີ້, ການຮ່ວມມື, ສະໜັບສະໜູນແລະຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນ ດ້ານເຕັກນິກວິຊາການ ແລະ ງົບປະມານ ກໍມີທ່າອ່ຽງຫຼຸດລົງ.

ເພື່ອຮັບປະກັນການພັດທະນາ, ສົ່ງເສີມ ແລະ ປົກປ້ອງສິດທິເດັກໃນດ້ານຕ່າງໆ ໃນນາມຕາງໜ້າລັດຖະບານແຫ່ງ ສປປລາວ ຂໍຢັ້ງຢືນວ່າ ຈະສືບຕໍ່ເອົາໃຈໃສ່ສົ່ງເສີມ ແລະ ພັດທະນາເດັກລາວໃນທຸກດ້ານ ເພື່ອໃຫ້ເດັກລາວ ກາຍເປັນເດັກທີ່ມີຄວາມຮູ້ຄວາມສາມາດ, ມີສຸຂະພາບແຂງແຮງ ເປັນອະນາຄົດທີ່ສົດໃສຂອງຊາດ ດ້ວຍການຮ່ວມກັບອົງການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນ, ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ທຸກຂັ້ນ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ພາກເອກະຊົນ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທາງສັງຄົມ ຕະຫຼອດຮອດພໍ່ແມ່ປະຊາຊົນທົ່ວປະເທດ ເພື່ອຍົກສູງຄວາມສຳຄັນຂອງເດັກ ດ້ວຍການສ້າງໂອກາດ, ສ້າງສະພາບແວດລ້ອມທີ່ອົບອຸ່ນປອດໄພ, ສ້າງອະນາຄົດ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ເດັກທຸກຄົນ ເພື່ອຮັບປະກັນວ່າສິດທິທັງໝົດຂອງເດັກ ໄດ້ຮັບການປົກປ້ອງຄຸ້ມຄອງ, ຄວາມເປັນຢູ່ທີ່ດີ, ໃຫ້ຄວາມສຳຄັນ ແລະ ຮັບຟັງສຽງຂອງເຂົາເຈົ້າ.

ເນື່ອງໃນໂອກາດວັນເດັກສາກົນວັນທີ 1 ມິຖຸນາປີ 2025 ນີ້, ຂໍໃຫ້ພວກລູກຫຼານອະນຸຊົນ, ເຍົາວະຊົນ ແລະ ເດັກລາວບັນດາເຜົ່າທຸກຖ້ວນໜ້າ ຈົ່ງມີແຕ່ຄວາມຜາສຸກ, ມີສຽງຍິ້ມຫົວ, ເປັນທີ່ຮັກແພງ ແລະ ທໍ່ແໜງທົນຮອນອັນປະເສີດ-ລ້ຳຄ່າຂອງຄອບຄົວ, ສັງຄົມ ແລະ ອະນາຄົດອັນສົດໃສຂອງປະເທດຊາດ.

ຂໍອວຍພອນໃຫ້ການສະເຫຼີມສະຫຼອງວັນເດັກສາກົນປີນີ້ມີຂະບວນຟົດຟື້ນ ແລະ ປະສົບຜົນສຳເລັດຢ່າງຈົບງາມ.



ສຸກສະບາຍຫາຍໂຣຄ

# ສັນຍານອັນຕະລາຍ ສ່ຽງຫົວໃຈວາຍ

# ຮຽບຮຽງໂດຍ: ທອມສະນິດ



ອາການຫົວໃຈວາຍ ຫຼື ຫົວໃຈລົ້ມເຫຼວ ເກີດຈາກການເຮັດວຽກຜິດປົກກະຕິຂອງຫົວໃຈ ເຮັດໃຫ້ບໍ່ສາມາດສູບເລືອດໄປລ້ຽງສ່ວນຕ່າງໆໄດ້ພຽງພໍ ຄວາມຮຸນແຮງມີທັງແບບກະທັນຫັນ ແລະ ຊຳເຮື້ອ ດັ່ງນັ້ນ, ສິ່ງສຳຄັນຄວນຈະສັງເກດອາການ ເພາະຫົວໃຈເປັນອະໄວຍະວະທີ່ເມື່ອເຈັບປ່ວຍແລ້ວລໍຖ້າບໍ່ໄດ້ ການຮູ້ໄວກໍຈະຊ່ວຍໃຫ້ດູແລຮັກສາໄດ້ຢ່າງຖືກຕ້ອງ ແລະ ຫຼຸດຄວາມສ່ຽງຕໍ່ການເສຍຊີວິດຍ້ອນຫົວໃຈວາຍໄດ້ຫຼາຍຂຶ້ນ.

ພະຍາດຫົວໃຈວາຍອາດເກີດໄດ້ຈາກຫຼາຍສາເຫດເຊັ່ນ: ເສັ້ນເລືອດຫົວໃຈຕີບ ຫຼື ຕັນແບບກະທັນຫັນ ຈຶ່ງເຮັດໃຫ້ກ້າມເນື້ອຫົວໃຈຕາຍ ສົ່ງຜົນໃຫ້ການບີບໂຕຂອງຫົວໃຈຫຼຸດລົງ; ລີ້ນຫົວໃຈຜິດປົກກະຕິ ເຊັ່ນ: ເສັ້ນເລືອດຫົວໃຈຕີບຮຸນແຮງ ເຮັດໃຫ້ການຮັບ-ສົ່ງເລືອດຂອງຫົວໃຈຫຼຸດລົງ; ກຸ່ມພະຍາດຍາດໄທລອຍ ເຊັ່ນ ໄທຣອຍເປັນພິດ ແລະ ແມ່ຍິງທີ່ມີອາການມານເປັນພິດ; ສະນັ້ນ, ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້ ເຮົາມີ 3 ອາການທີ່ອາດຈະເປັນສັນຍານເຕືອນວ່າຫົວໃຈຂອງທ່ານກຳລັງຈະວາຍ ຫຼື ລົ້ມເຫຼວ ຄື:

**- ເມື່ອຍງ່າຍ:** ອາດຈະບົ່ງບອກວ່າປະສິດທິພາບການເຮັດວຽກຂອງຫົວໃຈໜ້ອຍລົງ ຄວາມຮຸນແຮງຂອງພະຍາດມັກຈະກ່ຽວຂ້ອງກັບກິດຈະກຳທີ່ເຮັດ ຖ້າທ່ານມີອາການເມື່ອຍຢູ່ຕະຫຼອດເວລານັ້ນ ອາດໝາຍເຖິງຄວາມຜິດປົກກະຕິທີ່ຮຸນແຮງ.

**- ແສບ, ເຈັບສຽບແລະແໜ້ນໜ້າເອິກ:** ອາການນັ້ນອາດບົ່ງບອກໃຫ້ຮູ້ວ່າ ຫົວໃຈຂາດເລືອດໄປຫຼໍ່ລ້ຽງ ສ່ວນຫຼາຍມັກຈະຮູ້ສຶກແໜ້ນກາງໜ້າເອິກ ອາດຈະມີອາການປວດຈາກຕົ້ນຄໍຂຶ້ນໄປຫາຄາງກະໄຕ, ມີອາການເຄັ່ງໆ ຕຶງໆ, ມຶນຊາ, ແຕ່ບ່າໄຫຼ່ໄປເຖິງຕົ້ນແຂນ ຮູ້ສຶກຄືມີແນວໜັກໆມາເຕັງ ຖ້າອາການເຫຼົ່ານີ້ເປັນດົນກວ່າ 20 ນາທີ ອາດສົ່ງຜົນໃຫ້ກ້າມເນື້ອຫົວໃຈຕາຍ ເຮັດໃຫ້ປະສິດທິພາບຂອງຫົວໃຈຫຼຸດລົງ.

**- ບໍ່ສະບາຍໂຕເວລານອນ:** ຈະຮູ້ສຶກບໍ່ສະບາຍໂຕເວລານອນງາຍ ອາດຈະເປັນສັນຍານທີ່ບົ່ງບອກວ່າປະລິມານນໍ້າໃນຫົວໃຈເພີ່ມຂຶ້ນຈາກການເຮັດວຽກຂອງຫົວໃຈຜິດປົກກະຕິຂ້ອນຂ້າງຮຸນແຮງ.

**ແຫຼ່ງຂໍ້ມູນ:**

**www.sanook.com**



ອາດ ກະວີລາວ

## ທາງສອງເສັ້ນ

# ມ. ດວງມາລາ

⁕ ກະວີວອນສິ່ງໃຫ້ ໄວໜຸ່ມຍິງສາວ
ນັກຮຽນເຮົາຫວນຄິດ ຮໍ່າຮອນວິໄຈແຈ້ງ
ນຳມາປົວແປງແກ້ ບັນຫາເຄີຍບົກຜ່ອງ
ຂອງຕົນເອງເພື່ອໃຫ້ ຊີວິດໄດ້ພັດທະນາ

⁕ ຜ່ານມາມີນາດນ້ອງ ບາງຜ່ອງເມີນເສີຍ
ລະເລີຍໃນການຮຽນ ບໍ່ສຶກສາຄົ້ນ
ວິນແນມເຂັມໂມງຍ້າຍ ຍາມຄູບັນຍາຍບອກ
ບໍ່ເຄີຍຟັງຄິດຄົ້ນ ວິນແຕ່ໂສເລື່ອງຫຼິ້ນ ລືມເຫຼົ້າດື່ມເບຍ

⁕ ບາງຄົນອວດເກັ່ງກ້າ ວາງທ່າອັນຕະພານ
ວັນໆຊວນຊຸມແຊວ ນັດຕີຮາວີຂ້າ
ຜິດກັນປານສຸນັກບ້າ ຮາວີຕີບຕ່ອຍ
ເຫດຜົນພຽງເລັກນ້ອຍ ຄືຕີຕ້ານຍາດແຟນ ໜ່າຍເດ!

⁕ ຫຼາຍປະເດັນເດັ່ນຮ້ອນ ເຫັນຢູ່ຫຼວງຫຼາຍ
ໃນສັງຄົມປັດຈຸບັນ ອາເນກັນນອງມື້ວ
ກໍວຈະເສຍການຮຽນລ້າ ຫາກສັນຫາແນວບໍ່ແມ່ນ
ສັງຄົມຊິກ່າວເວົ້າ ເສຍໜ້າພໍ່ແມ່ຕົນ

⁕ ທາງທີ່ດີຄວນຄິດຄົ້ນ ຕັ້ງຕໍ່ຮຽນໜັງສື
ຖືສິນທຳມາເປັນຫຼັກ ຄວບຄຸມໃຈຕົນໄວ້
ທາງຊົ່ວດີມີໃຫ້ ເຮົາເດີນຕາມໄຕ່
ແລ້ວແຕ່ໃຈນາດນ້ອງ ຊິຫຽວເບື້ອງບ່ອນໃດ ນັ້ນແລ້ວ!



## ຫັກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັບເອງ ບໍ່ເຄັ່ງພິທີການ)*

# ສຽມທ້ຽນ

⁕ ***ກອງ****ປະຊຸມສະໄໝສາມັນ* ***ເທື່ອທີ 9*** *ຂອງສະພາແຫ່ງຊາດ ຊຸດທີ IX ຈະໄຂຂຶ້ນຢ່າງເປັນທາງການ ໃນວັນທີ* ***9 ມິຖຸນາ****ນີ້ ແລະ ຈະດຳເນີນໄປຈົນເຖິງວັນທີ* ***26 ມິຖຸນາ*** *2025 ຂໍໃຫ້ສຸຂະພາບພ້ອມ ປະຊຸມນັ່ງຍາວນານ* ***ທ່ານ ສສຊ ເອີຍ!*** *ເປັນຕົວແທນປະຊາຊົນ ເພື່ອຍື່ນຍໍສະເໜີເລື່ອງ ສິ່ງທີ່ເຄືອງຄາຂ້ອງ ໝອງໃຈປະຊາໄພ່ ອາໄສທ່ານຊ່ອຍເອົ້າໃຫ້ຂັ້ນເທິງຮັບຮູ້ ຕົກລົງແກ້ກະຈ່າງໃຈເຈົ້າ* ***ນັ້ນແລ້ວ!***

⁕ ***ຊົມ****ເຊີຍວັນທີ* ***1 ມິຖຸນາ*** *ວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ ຫຼາຍບ່ອນຫຼາຍສະຖານທີ່ໄດ້ມີການຈັດງານສະເຫຼີມສະຫຼອງ ຢ່າງຄຶກຄື້ນມ່ວນຊື່ນ ວັນວ່າແນວນານໜໍ່ໄມ້ ພົງໄພປ່າດົງໜາ ຖ້າບໍ່ມີການຮັກສາ ກໍສູນຫາຍສະຫຼາຍສິ້ນ ແມ່ນວ່າດິນດອນນໍ້າ ລຳທານໃສກໍແຫ້ງເຫືອດ ອຸນຫະພູມກໍປ່ຽນປີ້ນ ແຜ່ນດິນຮ້ອນດັ່ງອະເວຈີ* ***ນັ້ນແລ້ວ!***

## ຊວນຍິ້ມ

# ພົ້ງຄື່ງ

### ເລື່ອງ: ເມຍຂ້ອຍເອງ

ສອງສ່ຽວນັ່ງສັງສັນລົມກັນ ແລ້ວເກີດມີບົດສົນທະນາຂຶ້ນມາ

**ວັນແຕ໊ງ:** ມື້ກ່ອນ, ກູຂັບລົດໄປເຮັດວຽກ ເຫັນມີອຸບັດເຫດຢູ່ສີ່ແຍກໄຟແດງ, ຄົນຫຸ້ມກັນເບິ່ງນັກຫຼາຍໆ

**ວອງລີ:** ອ້າວຫວາ, ແລ້ວເປັນຈັ່ງໃດຕໍ່?

**ວັນແຕ໊ງ:** ກູກະຢາກເຫັນທັນແຫຼະ ແຕ່ຄົນຫຸ້ມຫຼາຍໂພດ ເບິ່ງຈັ່ງໃດກະບໍ່ເຫັນ, ໄດ້ຍິນແຕ່ສຽງເຂົາເວົ້າວ່າ: "ອີຕົນເດ ກຳລັງມີລູກຢູ່ແດ່, ເສຍດາຍເດເນາະ" ກູກະເລີຍຄິດອອກໄອເດຍໜຶ່ງ ເພື່ອຊິໄດ້ເຫັນວ່າເກີດຫຍັງຂຶ້ນ...

**ວອງລີ:** ມຶງເຮັດແນວໃດ ຈຶ່ງເຂົ້າໄປເຫັນໄດ້

**ວັນແຕ໊ງ:** ກູຍົກມືຂຶ້ນ ພ້ອມຮ້ອງຂຶ້ນວ່າ "ຄົນທີ່ຕາຍແມ່ນເມຍຂ້ອຍເອງ" ເທົ່ານັ້ນແຫຼະ... ຄົນກໍຫຼີກທາງໃຫ້ກູເຂົ້າໄປ, ແຕ່ພາບທີ່ເຫັນ ກູເກືອບເປັນລົມ

**ວອງລີ:** ເປັນຫຍັງມຶງ ມັນໜ້າສະຫຍົດສະຫຍອງຫວາ???

**ວັນແຕ໊ງ:** ບໍ່!!! ລົດຕຳໝາແມ່ມານຕາຍ

### ຄະຕິເຕືອນໃຈ

# ດອກຫຍ້າ

ກິນແກງໃຫ້ເຈົ້າຊອມດູກ້າງ ຄາດໍຊິລົ້ມຍາກ
ລາງເທື່ອມັນທາກຄາຫວ່າງແລ້ວ ໃຜຊິລົ້ມຊ່ອຍອອນ

ຂ່າວສະພາຕ່າງປະເທດ

# ປະທານສະພາແຫ່ງຊາດບຸນກາລີ ປະຕິເສດຂໍ້ສະເໜີໃຫ້ຈັດການ ລົງປະຊາມະຕິເລື່ອງເງິນເອີໂຣ


ນາຕາລີຢາ ຄິເຊໂລວາ

(Xinhua) - ວັນທີ 13 ພຶດສະພາຜ່ານມາ, ນາຕາລີຢາ ຄິເຊໂລວາ(NataliyaKiselova) ປະທານສະພາແຫ່ງຊາດບຸນກາລີ ໄດ້ປະຕິເສດຂໍ້ສະເໜີຂອງປະທານາທິບໍດີ ຣູເມນ ຣາເດຟ (Rumen Radev) ທີ່ຈະຈັດການລົງປະຊາມະຕິເລື່ອງການນຳເງິນສະກຸນເອີໂຣມາໃຊ້ໃນປະເທດ.

ເມື່ອວັນຈັນ, ຣາເດຟໄດ້ຍື່ນຂໍ້ສະເໜີຕໍ່ສະພາແຫ່ງຊາດເພື່ອຈັດການລົງປະຊາມະຕິ ວ່າຊາວບຸນກາລີສະໜັບສະໜູນການນຳເງິນສະກຸນເອີໂຣມາໃຊ້ໃນປີ 2026 ຫຼືບໍ່.

ນາງຄິເຊໂລວາກ່າວວ່າ: ການສະເໜີດັ່ງກ່າວບໍ່ສອດຄ່ອງກັບບົດບັນຍັດສະເພາະຂອງລັດຖະທຳມະນູນບຸນກາລີລວມທັງສົນທິສັນຍາ ແລະ ກົດໝາຍທີ່ກ່ຽວຂ້ອງ.

ບຸນກາລີ ເຂົ້າເປັນສະມາຊິກສະຫະພາບເອີຣົບໃນປີ2007.

ກາງເດືອນເມສາປີນີ້, ນາງ ເທເມນູຊກາ ເປດໂຄວາ (TemenuzhkaPetkova)ລັດຖະມົນຕີກະຊວງການເງິນກ່າວວ່າ: ບຸນກາລີ ໄດ້ບັນລຸມາດຕະຖານທັງໝົດສຳລັບການເປັນສະມາຊິກຂອງກຸ່ມເອີໂຣ ແລະ ກຳລັງລໍຖ້າຮ່າງບົດລາຍງານໂດຍຄະນະກຳມະການເອີຣົບ ແລະ ທະນາຄານກາງເອີຣົບ.

# ຄະນະປະຈຳ NPC ດຳເນີນການກວດກາການ ບັງຄັບໃຊ້ກົດໝາຍຄວາມປອດໄພຂອງອາຫານ



(Xinhua) - ຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ(NPC) ໄດ້ເລີ່ມດຳເນີນການກວດກາການບັງຄັບໃຊ້ກົດໝາຍຄວາມປອດໄພຂອງອາຫານຮອບໃໝ່ ເມື່ອວັນສຸກທີ 9 ພຶດສະພາຜ່ານມາ ໂດຍມີຈຸດປະສົງເພື່ອສ້າງຄວາມເຂັ້ມແຂງໃນການຄວບຄຸມຄວາມປອດໄພຂອງອາຫານ ແລະ ຍົກລະດັບຄວາມພະຍາຍາມດ້ານຄວາມປອດໄພຂອງອາຫານໂດຍລວມໃຫ້ດີຍິ່ງຂຶ້ນ.

ກົດໝາຍຄວາມປອດໄພຂອງອາຫານ ໄດ້ປະກາດໃຊ້ໃນປີ2009ແລະຜ່ານການປັບປຸງຢ່າງຮອບດ້ານໃນປີ 2015; ໂດຍຄະນະປະຈຳ NPC ໄດ້ດຳເນີນການກວດກາການບັງຄັບໃຊ້ກົດໝາຍກ່ອນໜ້ານີ້ ໃນປີ 2009, 2011 ແລະ 2016.

ໃນການກວດກາຮອບຫຼ້າສຸດນີ້, ທີມງານຈະດຳເນີນການປະເມີນຢູ່ສະຖານທີ່ຈິງໃນລະດັບແຂວງເຊັ່ນ: ເຫີຍຫຼົງຈຽງ, ຊຽງໄຮ້, ຈຽງຊີ, ເຫີໜານ, ກວາງຊີ ແລະ ການຊູ; ນອກຈາກນີ້, ຄະນະປະຈຳສະພາຜູ້ແທນປະຊາຊົນນະຄອນທຽນຈິນ, ຫຼຽວໜິງ, ອານຮຸຍ, ຫູເປີ່ຍ, ກຸ້ຍໂຈ ແລະ ຊິງໄຫ່ ຈະໄດ້ຮັບການມອບໝາຍໃຫ້ກວດກາການປະຕິບັດກົດໝາຍພາຍໃນເຂດບໍລິຫານຂອງຕົນ.

ທີມງານກວດກາຈະສຸມໃສ່ແປດຂົງເຂດທີ່ສຳຄັນ ລວມທັງການສ້າງລະບົບຕິດຕາມແລະປະເມີນຄວາມສ່ຽງດ້ານຄວາມປອດໄພຂອງອາຫານ, ການຄວບຄຸມຄວາມປອດໄພຂອງອາຫານໃນໂຮງຮຽນ, ການຄວບຄຸມການນຳເຂົ້າ ແລະ ສົ່ງອອກອາຫານ.

ທ່ານ ໄຄ ຕ້າເຟິງ (Cai Dafeng) ຮອງປະທານຄະນະປະຈຳ NPC ໄດ້ເນັ້ນໜັກເຖິງຄວາມສຳຄັນຂອງການຍຶດໝັ້ນໃນຫຼັກການພື້ນຖານຂອງຄວາມປອດໄພຂອງອາຫານຢ່າງໜັກແໜ້ນ, ຍົກລະດັບປະສິດທິຜົນໃນການຄວບຄຸມຄວາມປອດໄພຂອງອາຫານ, ຊຸກຍູ້ການປະຕິບັດກົດໝາຍຄວາມປອດໄພຂອງອາຫານຢ່າງຮອບດ້ານ ແລະ ມີປະສິດທິຜົນຍິ່ງຂຶ້ນ ເພື່ອໃຫ້ການຮັບປະກັນທາງກົດໝາຍທີ່ເຂັ້ມແຂງໃນການປົກປ້ອງສຸຂະພາບ ແລະ ຄວາມປອດໄພຂອງປະຊາຊົນ.

# ປະທານສະພາ Liberia ລາອອກຈາກຕຳແໜ່ງ ທ່າມກາງຂໍ້ໂຕ້ຖຽງທາງກົດໝາຍທີ່ແກ່ຍາວ




(Xinhua) - ຟົນາຕີ ຄອຟຟາ (Fonati Koffa) ປະທານສະພາຜູ້ແທນປະຊາຊົນ(ສະພາຕ່ຳ) ແຫ່ງສາທາລະນະລັດລີເບເຣຍ ໄດ້ຍື່ນໃບລາອອກເມື່ອວັນຈັນທີ 12 ພຶດສະພາຜ່ານມາ ທ່າມກາງຂໍ້ຂັດແຍ້ງໃນສະພາທີ່ແກ່ຍາວມາຫຼາຍເດືອນ.

ສະພາຜູ້ແທນປະຊາຊົນເກີດຄວາມແຕກແຍກເປັນເວລາ 7 ເດືອນ ຈົນກະທັ້ງເກີດການຈັດຕັ້ງຄະນະຜູ້ນຳຄູ່ຂະໜານຂຶ້ນ, ໃນຂະນະທີ່ຝ່າຍນິຕິບັນຍັດຂອງລັດຖະບານແບ່ງອອກເປັນ 2 ຝ່າຍຄື: ຝ່າຍນິຕິບັນຍັດ ເຊິ່ງຄອຟຟາ ເປັນສະມາຊິກຢູ່ ແລະ ຝ່າຍສຽງສ່ວນຫຼາຍ ເຊິ່ງເປັນປະທານໂດຍຣິຊາດຄູນ(Richard Koon).

ຄວາມບໍ່ລົງລອຍກັນ ແລະການແບ່ງແຍກໃນສະພາຜູ້ແທນປະຊາຊົນ ໄດ້ເຮັດໃຫ້ເກີດມີການໂຕ້ຖຽງກັນທາງກົດໝາຍ ແລະ ການເມືອງຢ່າງດຸເດືອດກ່ຽວກັບຕຳແໜ່ງປະທານສະພາ; ທັງສອງກຸ່ມໄດ້ຈັດກອງປະຊຸມສະພານິຕິບັນຍັດແຍກກັນ ຫຼັງຈາກກຸ່ມສຽງສ່ວນຫຼາຍປະກາດວ່າຄອຟຟາ ໄດ້ຖືກຂັບໄລ່ອອກຈາກຕຳແໜ່ງ ແລະ ແຕ່ງຕັ້ງຄູນໃຫ້ດຳລົງຕຳແໜ່ງແທນ. ຄຳຕັດສິນຂອງສານສູງສຸດເມື່ອວັນທີ 23 ເມສາຜ່ານມາ ໄດ້ຢືນຢັນການເລືອກຕັ້ງຂອງຄອຟຟາແລະປະກາດວ່າ ທຸກຄວາມພະຍາຍາມທີ່ຈະໂຄ່ນລົ້ມເຂົາ ຖືເປັນສິ່ງທີ່ຜິດກົດໝາຍ.

ຄອຟຟາ ກ່າວຕໍ່ບັນດານັກຂ່າວໃນນະຄອນຫຼວງມອນໂຣວີ (Monrovia) ວ່າ ເຂົາໄດ້ລາອອກຈາກຕຳແໜ່ງປະທານສະພາເມື່ອວັນຈັນທີ່ຜ່ານມາ, ໂດຍອ້າງເຖິງການປະຕິເສດຂອງຝ່າຍບໍລິຫານຂອງລັດຖະບານ ທີ່ຈະປະຕິບັດຕາມຄຳຕັດສິນຂອງສານສູງສຸດຂອງປະເທດ. ຕາມການລາຍງານຂອງສື່ມວນຊົນທ້ອງຖິ່ນ, ຫວ່າງມໍ່ໆມານີ້, ລັດຖະບານໄດ້ປະກາດການສະໜັບສະໜູນກຸ່ມສຽງສ່ວນຫຼາຍ.

ຄອຟຟາ ກ່າວຕໍ່ບັນດານັກຂ່າວວ່າ "ຂ້າພະເຈົ້າບໍ່ສາມາດເຈລະຈາທາງກົດໝາຍໄດ້; ຫາກຂ້າພະເຈົ້າລາອອກ, ນັ້ນແມ່ນຂະບວນການທາງກົດໝາຍ-ຕຳແໜ່ງທີ່ວ່າງຈະຖືກສ້າງຂຶ້ນ ແລະ ຈະມີການເລືອກຕັ້ງປະທານສະພາຜູ້ແທນປະຊາຊົນຜູ້ໃໝ່".

ຄອຟຟາ ກ່າວຕື່ມວ່າ "ເມື່ອປະທານາທິບໍດີກ່າວວ່າເຂົາຈະກັບຄືນສູ່ທ່າທີເດີມຂອງເຂົາ- ເພື່ອເຮັດວຽກຮ່ວມກັບກຸ່ມສຽງສ່ວນຫຼາຍ-ພວກເຮົາກໍຕ້ອງປະເມີນການມີສ່ວນຮ່ວມຂອງພວກເຮົາຄືນໃໝ່".

# ສະພາແບນຊິກ ລົງມະຕິຍົກເລີກ ແຜນການເຊົາໃຊ້ພະລັງງານນິວເຄລຍ



(AFP) - ລັດຖະບານແບນຊິກຍົກເລີກແຜນການເຊົາໃຊ້ພະລັງງານນິວເຄລຍຢ່າງເປັນທາງການ ຫຼັງຈາກສະພາຜູ້ແທນລາສະດອນ ລົງມະຕິຍົກເລີກຄຳໝັ້ນສັນຍາທີ່ມີມາ 20 ປີ ແລະ ອະນຸຍາດໃຫ້ກໍ່ສ້າງເຕົາປະຕິກອນເຄື່ອງໃໝ່.

ວັນພະຫັດທີ 15 ພຶດສະພາຜ່ານມາ, ບັນດາສະມາຊິກສະພາຜູ້ແທນລາສະດອນ (ສະພາຕ່ຳທີ່ມີ 150 ທີ່ນັ່ງ) ໄດ້ສະໜັບສະໜູນແຜນການຂອງລັດຖະບານຊຸດໃໝ່ທີ່ນຳໂດຍຝ່າຍອະນຸລັກນິຍົມ ທີ່ຈະຟື້ນຟູອຸດສາຫະກຳນິວເຄລຍຂອງປະເທດດ້ວຍຄະແນນສຽງເຫັນດີ 102 ຕໍ່ 8 ສຽງ ແລະ ງົດອອກສຽງ 31 ສຽງ.

ມາຕິເຍີ ບີເຮ (Mathieu Bihet) ລັດຖະມົນຕີກະຊວງພະລັງງານຂອງແບນຊິກ ກ່າວວ່າ "ສະພາຜູ້ແທນລາສະດອນ ຫາກໍປ່ຽນໜ້າປະຫວັດສາດແຫ່ງການຂັດຂວາງ ແລະ ຄວາມລັງເລ ໃນສອງທົດສະວັດທີ່ຜ່ານມາ ເພື່ອປູທາງໄປສູ່ຮູບແບບພະລັງງານທີ່ສົມຈິງ ແລະ ຢືດຢຸ່ນ".

ການລົງມະຕິຄັ້ງນີ້ໄດ້ຍົກເລີກກົດໝາຍສະບັບປີ 2003 ທີ່ກຳນົດໃຫ້ແບນຊິກຢຸດຕິການໃຊ້ງານເຕົາປະຕິກອນນິວເຄລຍຂອງປະເທດ ພາຍໃນປີ 2025 ແລະ ຫ້າມສ້າງກຳລັງການຜະລິດໃໝ່ ເຊິ່ງກຳນົດເວລາດັ່ງກ່າວຖືກເລື່ອນອອກໄປແລ້ວ 10 ປີ ເມື່ອປີ 2022, ຫຼັງຈາກຄວາມຂັດແຍ້ງລະຫວ່າງລັດເຊຍ ກັບ ອູແກຣນເຮັດໃຫ້ເກີດວິກິດການດ້ານພະລັງງານ, ສົ່ງຜົນໃຫ້ລາຄາແກັສຖີບຕົວສູງຂຶ້ນ.

ບີເຮກ່າວເສີມວ່າ: ການເຄື່ອນໄຫວຂອງລັດຖະບານ ບໍ່ພຽງເປັນການປະຕິຮູບດ້ານພະລັງງານເທົ່ານັ້ນ, ແຕ່ຍັງເປັນບາດກ້າວສຳຄັນສຳລັບອະນາຄົດຂອງແບນຊິກທັງໃນດ້ານເສດຖະກິດ, ສິ່ງແວດລ້ອມ ແລະ ຍຸດທະສາດ.

ຕາມຂໍ້ມູນຈາກອົງການພະລັງງານສາກົນ(International Energy Agency - IEA), ປັດຈຸບັນແບນຊິກມີໂຮງໄຟຟ້ານິວເຄລຍ 2 ແຫ່ງ, ແຕ່ລະແຫ່ງມີເຕົາປະຕິກອນທີ່ປະຕິບັດງານຢູ່ 2 ໜ່ວຍ ໂດຍນິວເຄລຍກວມເອົາ 40% ຂອງການຜະລິດພະລັງງານທັງໝົດຂອງປະເທດ, ຖັດມາແມ່ນແກັສ ແລະ ພະລັງງານລົມກວມເອົາ 21% ແລະ 19% ຕາມລຳດັບ.

# ສະພາແຫ່ງຊາດຫວຽດນາມ ອະນຸມັດນະໂຍບາຍ ພິເສດ ເພື່ອຊຸກຍູ້ພາກເສດຖະກິດເອກະຊົນ



(Xinhua) - ວັນເສົາທີ 17 ພຶດສະພາຜ່ານມາ, ສະພາແຫ່ງຊາດຫວຽດນາມ ໄດ້ຜ່ານມະຕິແນະນຳກົນໄກແລະນະໂຍບາຍຊຸດໜຶ່ງ ແນໃສ່ເລັ່ງການພັດທະນາພາກເສດຖະກິດເອກະຊົນ; ນະໂຍບາຍຊຸດດັ່ງກ່າວ ໃຫ້ການສະໜັບສະໜູນໃນຂົງເຂດທີ່ສຳຄັນເຊັ່ນ: ການເຂົ້າເຖິງສິນເຊື່ອ, ການນຳໃຊ້ທີ່ດິນ ແລະ ແຮງຈູງໃຈດ້ານພາສີ.

ພາຍໃຕ້ມະຕິສະບັບໃໝ່ນີ້, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຈະໄດ້ຮັບການຍົກເວັ້ນພາສີລາຍໄດ້ ເປັນເວລາ 3 ປີ ນັບຈາກວັນທີ່ໄດ້ຮັບໃບທະບຽນວິສາຫະກິດຄັ້ງທຳອິດ; ບັນດາ Startup ແລະ ບໍລິສັດຄຸ້ມຄອງທຶນຈະໄດ້ຮັບການຍົກເວັ້ນພາສີລາຍໄດ້ໃນສອງປີທຳອິດ ແລະ ໄດ້ຮັບການຫຼຸດພາສີ 50% ສຳລັບສີ່ປີຂ້າງໜ້າ.

ຕາມຂໍ້ມູນຂອງລັດຖະບານ, ໃນປັດຈຸບັນ, ພາກເອກະຊົນ ໄດ້ປະກອບສ່ວນປະມານ 51% ຂອງລວມຍອດຜະລິດຕະພັນພາຍໃນ (GDP) ຂອງປະເທດ ແລະ ກວມເອົາຫຼາຍກວ່າ 30% ຂອງລາຍຮັບງົບປະມານແຫ່ງລັດ.

ຕາມມະຕິຂອງກົມການເມືອງສູນກາງພັກທີ່ໄດ້ອອກໃນຕົ້ນເດືອນດຽວກັນ, ຄາດວ່າຫວຽດນາມ ຈະມີວິສາຫະກິດເອກະຊົນ 2 ລ້ານແຫ່ງ ແລະຢ່າງໜ້ອຍມີ 20 ບໍລິສັດຂະໜາດໃຫຍ່ຂອງຫວຽດນາມ ເຂົ້າຮ່ວມໃນຕ່ອງໂສ້ມູນຄ່າລະດັບໂລກ ໃນປີ 2030.

# Czech ຈະຈັດການເລືອກຕັ້ງສະພາໃນເດືອນຕຸລາ

(Xinhua) - ເປເຕີ ພາເວວ (Petr Pavel) ປະທານາທິບໍດີສາທາລະນະລັດເຊັກ ໄດ້ປະກາດເມື່ອວັນອັງຄານທີ 13 ພຶດສະພາຜ່ານມາວ່າ ການເລືອກຕັ້ງສະມາຊິກສະພາຜູ້ແທນປະຊາຊົນ ເຊິ່ງເປັນສະພາຕ່ຳຂອງລັດຖະສະພາ ຈະຈັດຂຶ້ນໃນວັນທີ 3 ແລະ 4 ຕຸລານີ້, ອີງຕາມຖະແຫຼງການໃນເວັບໄຊຂອງສຳນັກງານປະທານາທິບໍດີ.



ເປເຕີ ພາເວວ

ເປັນຄັ້ງທຳອິດທີ່ພົນລະເມືອງເຊັກທີ່ອາໄສຢູ່ຕ່າງປະເທດ ຈະໄດ້ຮັບອະນຸຍາດໃຫ້ລົງຄະແນນສຽງທາງໄປສະນີ; ຕາມຂໍ້ມູນຂອງກະຊວງການຕ່າງປະເທດ, ມີຊາວເຊັກຫຼາຍກວ່າ 600,000 ຄົນ ທີ່ອາໄສຢູ່ຕ່າງປະເທດໃນໄລຍະຍາວ ໂດຍຄາດວ່າຈະມີຜູ້ມາໃຊ້ສິດລົງຄະແນນສຽງທາງໄປສະນີຫຼາຍສິບພັນຄົນ.

ສະພາຕ່ຳປະກອບດ້ວຍສະມາຊິກ 200 ທ່ານ ມີອາຍຸການ 4 ປີ, ການເລືອກຕັ້ງຄັ້ງຫຼ້າສຸດ ຈັດຂຶ້ນໃນວັນທີ 8 ແລະ 9 ຕຸລາ 2021.

# ພັກທະມິດປະຊາທິປະໄຕ ຊະນະການເລືອກຕັ້ງ ສະພາແຫ່ງຊາດປອກຕຸຍການ, ບໍ່ໄດ້ສຽງສ່ວນຫຼາຍ




(Xinhua) - ຕາມຜົນການເລືອກຕັ້ງຢ່າງເປັນທາງການ, ພັນທະມິດປະຊາທິປະໄຕ ຝ່າຍກາງ-ຂວາ ເຊິ່ງນຳໂດຍນາຍົກລັດຖະມົນຕີ ຫຼູຍສ໌ ມອນເຕເນໂກຣ (Luis Montenegro) ຊະນະການເລືອກຕັ້ງສະພາແຫ່ງຊາດປອກຕຸຍການ ເມື່ອວັນອາທິດທີ 19 ພຶດສະພາຜ່ານມາ; ແນວໃດກໍຕາມ, ພັນທະມິດ ໄດ້ 86 ທີ່ນັ່ງ, ຍັງບໍ່ຮອດ 116 ທີ່ນັ່ງ ຂອງຈຳນວນສຽງສ່ວນຫຼາຍທີ່ຕ້ອງການໃນສະພາທີ່ມີສະມາຊິກ 230 ຄົນ ເພື່ອຈັດຕັ້ງລັດຖະບານເອງໄດ້.

ອີງຕາມຂໍ້ມູນຫຼ້າສຸດ ຈາກກະຊວງບໍລິຫານພາຍໃນ, ພັກ Chega (ພໍແລ້ວ) ຝ່າຍຂວາຈັດ ໄດ້ອັນດັບສອງ ດ້ວຍ 60 ທີ່ນັ່ງ, ພັກສັງຄົມນິຍົມຕາມມາຢ່າງໃກ້ຊິດດ້ວຍ 58 ທີ່ນັ່ງ.

ນະໂຍບາຍຄົນເຂົ້າເມືອງ, ວິກິດການຄ່າຄອງຊີບ ແລະ ທີ່ຢູ່ອາໄສ ເປັນບັນຫາສຳຄັນໃນການເລືອກຕັ້ງຄັ້ງນີ້, ກໍ່ໃຫ້ເກີດການໂຕ້ຖຽງຢ່າງກວ້າງຂວາງໃນສັງຄົມ; ການຢັ່ງຫາງສຽງສະແດງໃຫ້ເຫັນວ່າ, ຜູ້ມີສິດເລືອກຕັ້ງມີຄວາມເປັນຫ່ວງເພີ່ມຂຶ້ນຢ່າງສູງກ່ຽວກັບສະຖຽນລະພາບທາງການເມືອງແລະສະຫວັດດີການທາງເສດຖະກິດ.

ປອກຕຸຍການ ເປັນສາທາລະນະລັດທີ່ມີລະບົບລັດຖະສະພາດຽວ, ໄດ້ຮັບການເລືອກຕັ້ງໂດຍການລົງຄະແນນສຽງໂດຍກົງເພື່ອປະຕິບັດໜ້າທີ່ເປັນເວລາສີ່ປີ; ວັນທີ 13 ມີນາຜ່ານມາ, ປະທານາທິບໍດີ ມາຣ໌ເຊໂລ ເຣເບໂລ ເດີ ຊູຊາ (Marcelo Rebelo de Sousa) ໄດ້ຍຸບສະພາແຫ່ງຊາດ ແລະ ດຳເນີນການເລືອກຕັ້ງໃໝ່ໃນວັນທີ 18 ພຶດສະພານີ້ ເຊິ່ງເປັນການເລືອກຕັ້ງສະພາແຫ່ງຊາດລ່ວງໜ້າຄັ້ງທີ 3 ຂອງປະເທດ ໃນຮອບເວລາບໍ່ເຖິງ 4 ປີ.



## ຕິດຕາມ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 28-29 ພຶດສະພາຜ່ານມາ, ທ່ານ ບຸນຕາ ເທບພະວົງ ກຳມະການສຳຮອງສູນກາງພັກ, ຄະນະປະຈຳສະພາແຫ່ງຊາດ (ສພຊ), ປະທານກຳມາທິການວັດທະນະທຳ-ສັງຄົມ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດບັນດາຄາດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ຢູ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສາທາລະນະສຸກ, ກະຊວງສຶກສາທິການ ແລະກິລາ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍການຮ່ວມເຮັດວຽກກັບບັນດາທ່ານຮອງລັດຖະມົນຕີ ແລະ ພາກສ່ວນທີ່ກ່ຽວຂ້ອງ; ທັງນີ້, ກໍເພື່ອຕິດຕາມ, ຊຸກຍູ້ບັນດາຂະແໜງການໃນຂົງເຂດວັດທະນະທຳ-ສັງຄົມ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດລັດຖະທຳມະນູນ, ບັນດາກົດໝາຍ, ນິຕິກຳໃຕ້ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ປະຈຳປີ 2025 ເຊິ່ງຈະເປັນພື້ນຖານສຳຄັນໃຫ້ແກ່ການສະໜອງຂໍ້ມູນເພື່ອສະຫຼຸບການຈັດຕັ້ງປະຕິບັດບັນດາແຜນການດັ່ງກ່າວ ໃນ 6 ເດືອນຕົ້ນປີແລະກຳນົດທິດທາງ 6 ເດືອນທ້າຍປີ 2025 ແລະ ອອກເປັນມະຕິກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ວ່າດ້ວຍແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ ໃນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຊ ຊຸດທີ IX ທີ່ຈະໄຂຂຶ້ນໃນລະຫວ່າງວັນທີ 9-26 ມິຖຸນານີ້.

ໃນການເຄື່ອນໄຫວໄດ້ຮັບຟັງຜົນສຳເລັດການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ເພື່ອເຫັນໄດ້ບັນດາຄາດໝາຍສູ້ຊົນທີ່ສະພາແຫ່ງຊາດຮັບຮອງ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະວິທີແກ້ໄຂ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມທີ່ຕິດພັນກັບຂົງເຂດວັດທະນະທຳ-ສັງຄົມ ໂດຍສະເພາະ 16 ຄາດໝາຍໃນຂົງເຂດສຶກສາທິການ ແລະ ກິລາ, ສະພາບການຮຽນ-ການສອນ ໃນສົກຮຽນ 2024-2025 ໃນທຸກຂັ້ນທຸກສາຍ, ຕິດຕາມແລະຊຸກຍູ້ຕາມຄຳຂວັນທີ່ວ່າ "ນຳເອົານ້ອງກັບຄືນສູ່ໂຮງຮຽນ" ແລະອັດຕາການປະລະການຮຽນ, ນະໂຍບາຍ ແລະມາດຕະການແກ້ໄຂບັນຫາການຂາດແຄນຄູສອນ, ການປະລະການຮຽນ, ການສົ່ງເສີມເຂົ້າຮຽນສາຍວິຊາຊີບ, ການຈັດສັນ, ການຄຸ້ມຄອງ ແລະ ການນຳໃຊ້ແຜນງົບບໍລິຫານ ແລະ ແຜນການລົງທຶນ ແຕ່ສູນກາງຮອດທ້ອງຖິ່ນ; ການຈັດຕັ້ງປະຕິບັດ 11 ຄາດໝາຍຂອງຂະແໜງການສາທາລະນະສຸກ, ນະໂຍບາຍ 5 ດີ 1 ພໍໃຈ, ການກຳນົດລາຄາການບໍລິການປິ່ນປົວຂອງສະຖານການບໍລິການປິ່ນປົວສຸຂະພາບພາກເອກະຊົນ, ການແກ້ໄຂບັນຫາເຄັ່ງຮ້ອນທີ່ເປັນປາກົດການຫຍໍ້ທໍ້ໃນສັງຄົມ ໂດຍສະເພາະການນຳໃຊ້ຢາສູບໄຟຟ້າ, ການບໍລິໂພກຄຳລາເຈັນທີ່ມີສານເສບຕິດ ແລະ ການຕິດເຊື້ອ HIV; ໂຄງການ ຫຼື ກິດຈະກຳ ໃນການພັດທະນາສີມືແຮງງານຂອງປະຊາຊົນ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ທັງພາຍໃນ ແລະ ຕ່າງປະເທດ, ການຮ່ວມມືກັບສະຖາບັນການສຶກສາ, ວິສາຫະກິດ ແລະ ພາກສ່ວນອື່ນໆ, ກົນໄກການຕິດຕາມກວດກາການປະຕິບັດກົດໝາຍແຮງງານ ໃນວິສາຫະກິດ ແລະ ສະຖານປະກອບການຕ່າງໆ, ສະຖິຕິກ່ຽວກັບການລະເມີດກົດໝາຍແຮງງານ; 7 ຄາດໝາຍໃນຂົງເຂດຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນການອະນຸລັກຮັກສາແລະສົ່ງເສີມຮີດຄອງປະເພນີອັນດີງາມຂອງຊາດ. ນອກນັ້ນ, ຍັງໄດ້ປຶກສາຫາລືກ່ຽວກັບປາກົດການຫຍໍ້ທໍ້ໃນສັງຄົມທີ່ກຳລັງເປັນບັນຫາທ້າທາຍແລະເຄັ່ງຮ້ອນໃນສັງຄົມລາວໃນປັດຈຸບັນເປັນຕົ້ນບັນຫາການນຳໃຊ້ຢາສູບໄຟຟ້າ, ຄຳລາເຈັນ, ປູມເປົ້າທີ່ປົນເປື້ອນສານທີ່ເປັນອັນຕະລາຍຕໍ່ສຸຂະພາບຂອງເດັກ, ເຍົາວະຊົນ ແລະ ໄວໜຸ່ມ; ການຕິດເຊື້ອ HIV/ພະຍາດເອດທີ່ມີອັດຕາເພີ່ມຂຶ້ນຫຼາຍ ແລະ ບັນຫາອື່ນໆຕື່ມອີກ.

ທ່ານ ບຸນຕາ ເທບພະວົງ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດແຕ່ລະຄາດໝາຍທີ່ຍາດມາໄດ້ ທັງໃຫ້ການຮ່ວມມືແລະສະໜອງຂໍ້ມູນຮອບດ້ານ ເຊິ່ງຈະເປັນຂໍ້ມູນພື້ນຖານອັນສຳຄັນ, ເປັນບ່ອນອີງທີ່ຈະສັງລວມລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ໃນການພິຈາລະນາ ແລະ ໃຫ້ທິດຊີ້ນຳໃນການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ ທັງເນັ້ນໜັກໃຫ້ພາກສ່ວນກ່ຽວຂ້ອງສືບຕໍ່ຈັດຕັ້ງປະຕິບັດວຽກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ເຂັ້ມງວດ, ປະຕິບັດໜ້າທີ່ວຽກງານບົນພື້ນຖານທາງດ້ານກົດໝາຍ, ລະບຽບການຕ່າງໆ ໃຫ້ຖືກຕ້ອງ, ໂປ່ງໃສ, ມີການຕິດຕາມກວດກາເປັນປົກກະຕິ.

**(ນາງ ອາລິນ ສຸພົມມະປະດິດ)**



ເບິ່ງໄວ້ ໄດ້ບົດຮຽນ

# ກົດໝາຍເພື່ອປົກປ້ອງ ແລະ ສົ່ງເສີມສິ່ງແວດລ້ອມ

❖ ວິເສດ ສະແຫວງສຶກສາ

ເພື່ອເປັນການຕ້ອນຮັບວັນສິ່ງແວດລ້ອມສາກົນ (5 ມິຖຸນາ) ທີ່ຈະມາເຖິງນີ້ ຜູ້ຂຽນໄດ້ສັງລວມເອົາບາງບົດຮຽນຈາກປະເທດອົດສະຕຣາລີ, ນິວຊີແລນແລະກຳປູເຈຍ ມາເລົ່າສູ່ຟັງ ເພື່ອເບິ່ງນຳກັນວ່າ ຢູ່ບ້ານເພິ່ນເມືອງທ່ານນັ້ນ ເຂົາມີວິທີການປ້ອງກັນ ແລະ ສົ່ງເສີມສິ່ງແວດລ້ອມແນວໃດ.

ອົດສະຕຣາລີ ເປັນປະເທດໜຶ່ງທີ່ຈິງຈັງຕັ້ງໜ້າກັບບັນຫາສິ່ງແວດລ້ອມ ໂດຍໄດ້ຕັ້ງເປົ້າໝາຍເອົາໄວ້ວ່າ ພາຍໃນປີ 2030 (ອີກພຽງ 5 ປີ) ຈະຕ້ອງຫຼຸດຜ່ອນການປ່ອຍອາຍພິດກາກບອນໃຫ້ໄດ້ 43% (ຈາກລະດັບປີ 2005) ແລະ ພາຍໃນປີ 2050 ຕ້ອງຫຼຸດຜ່ອນໃຫ້ໄດ້ 100% ໝາຍຄວາມວ່າ ເຮັດໃຫ້ການປ່ອຍອາຍພິດກາກບອນ ເປັນສູນ (0); ເພື່ອບັນລຸເປົ້າໝາຍດັ່ງກ່າວ, ທາງການອົດສະຕຣາລີໄດ້ຮັບຮອງເອົາກົດໝາຍວ່າດ້ວຍການປ່ຽນແປງຂອງສະພາບອາກາດ ສະບັບສົມບູນ ໃນເດືອນກັນຍາ ປີ 2023, ຈຸດທີ່ເປັນໜ້າສົນໃຈກ່ຽວກັບມາດຕະການຂອງອົດສະຕຣາລີນັ້ນ ກໍຄືຄວາມພະຍາຍາມໃນການຫຼຸດຜ່ອນການປ່ອຍອາຍພິດກາກບອນນັ້ນ ໄປສົມຄູ່ກັບການພັດທະນາພະລັງງານທົດແທນ(ພະລັງງານສະອາດ) ໂດຍມີເປົ້າໝາຍໃຫ້ມີການຂະຫຍາຍຕົວໃນລະດັບ 82% ຂອງຕະຫຼາດພະລັງງານໃນປະເທດທັງໝົດ ພາຍໃນປີ 2030.

ໃນໄລຍະດຽວກັບຂ່າວຈາກອົດສະຕຣາລີ ທີ່ກ່າວມາຂ້າງເທິງນັ້ນ ກໍມີຂ່າວໃຫຍ່ໃນເລື່ອງດຽວກັນອອກມາຈາກນິວຊີແລນ ປະເທດບ້ານໃກ້ເຮືອນຄຽງຂອງອົດສະຕຣາລີວ່າ ປະເທດນີ້ໄດ້ວາງເປົ້າໝາຍເຮັດໃຫ້ການປ່ອຍອາຍພິດກາກບອນກາຍເປັນສູນ (0) ພາຍໃນປີ 2030 ຄືໄວກວ່າອົດສະຕຣາລີເຖິງ 20 ປີ. ເພື່ອບັນລຸເປົ້າໝາຍດັ່ງກ່າວ, ນິວຊີແລນ ໄດ້ມີນະໂຍບາຍຕົວຈິງຫຼາຍດ້ານ ເພື່ອທັງຫຼຸດຜ່ອນການປ່ອຍອາຍພິດກາກບອນ ແລະ ທັງເພື່ອສ້າງສະພາບແວດລ້ອມດ້ານການພັດທະນາໃຫ້ເປັນມິດກັບສິ່ງແວດລ້ອມ ຕົວຢ່າງ: ໃນປີ 2023 ທາງການຂອງປະເທດນີ້ ໄດ້ອອກກົດໝາຍຄວບຄຸມການປ່ອຍມົນລະພິດຈາກຟາມລ້ຽງສັດ ເນື່ອງຈາກມີການຄົ້ນພົບວ່າ ມົນລະພິດທີ່ປ່ອຍອອກມາທາງລົມປາກເວລາສັດລ້ຽງຫາວ ຫຼື ເອື້ອມນັ້ນ ມີສ່ວນສ້າງອາຍແກັດເຮືອນແກ້ວ; ກົດໝາຍສະບັບດັ່ງກ່າວ ບໍ່ໄດ້ກຳນົດຫ້າມສັດຫາວ ຫຼື ເອື້ອມ ແຕ່ໄດ້ເອົາມາດຕະການຄວບຄຸມເພື່ອຫຼຸດຜ່ອນການຫາວ ຫຼື ເອື້ອມດັ່ງກ່າວລົງດ້ວຍວິທີປັບປຸງບ່ອນລ້ຽງ, ການໃຫ້ອາຫານ ແລະ ອື່ນໆ. ຕໍ່ມາອີກບໍ່ດົນ, ທາງການຂອງປະເທດນີ້ ກໍໄດ້ຮັບຮອງເອົາກົດໝາຍຕື່ມອີກສະບັບໜຶ່ງ ເພື່ອຊ່ວຍໃຫ້ຂະແໜງກະສິກຳຂອງປະເທດ ໄດ້ປຽບໃນການຍາດແຍ່ງຕະຫຼາດກະສິກຳລະດັບໂລກ ໂດຍເນັ້ນຜະລິດຕະພັນກະສິກຳທີ່ເປັນມິດກັບສິ່ງແວດລ້ອມ; ພາຍໃຕ້ນະໂຍບາຍໃໝ່ນີ້, ຊາວກະສິກອນຍັງຈະສາມາດຫຼຸດຜ່ອນຕົ້ນທຶນການຜະລິດ, ສ່ວນທາງເບື້ອງລັດຖະບານນັ້ນ ຈະເຮັດໜ້າທີ່ດ້ານການວິໄຈແລະກຳນົດນະໂຍບາຍດຶງດູດຕ່າງໆ.

ຈາກກຳປູເຈຍ ກໍມີຂ່າວອ່າວເກົ່າອອກມາແຕ່ເດືອນກໍລະກົດ 2017 ທີ່ໃຫ້ຮູ້ວ່າ ທາງການຂອງປະເທດນີ້ ໄດ້ອອກກົດໝາຍທີ່ກຳນົດຫ້າມສົ່ງອອກດິນຊາຍໄປຕ່າງປະເທດ. ກ່ອນໜ້າມີກົດໝາຍສະບັບນີ້, ການຂຸດຄົ້ນ ແລະ ສົ່ງອອກດິນຊາຍຈາກຊາຍຝັ່ງຕາເວັນຕົກຂອງກຳປູເຈຍ ໄດ້ດຳເນີນໄປແບບອຶກກະທຶກຄຶກໂຄມ, ບໍ່ມີການຄວບຄຸມ, ຂາດຄວາມໂປ່ງໃສແລະມີຜົນກະທົບຕໍ່ລະບົບນິເວດ; ປະເທດທີ່ນຳເຂົ້າດິນຊາຍຈາກກຳປູເຈຍນັ້ນ ແມ່ນສິງກະໂປ. ກົດໝາຍທີ່ວ່ານັ້ນ ປະກາດໃຊ້ໃນວັນທີ 10 ກໍລະກົດ 2017 ເຮັດໃຫ້ການສົ່ງອອກດິນຊາຍຈາກເກາະກົງ ປິດລົງຢ່າງສິ້ນເຊີງ.

ທະນາຄານພັດທະນາລາວ
LDB Bank




*#ບ່ອກກະບື*

ຢູ່ປ້າຍປະກາດຕິດຢູ່ຂ້າງນອກປ້ອມຕໍາຫຼວດ ມີເນື້ອໃນຂຽນວ່າ: "ຈະມີຂອງຂວັນສຳລັບຜູ້ພົບເຫັນຊາກສົບຂອງທ້າວ ເກວິນ ແລບເຟີນ, ເຊື່ອວ່າຕົກນ້ຳຕາຍ ເວລາເອົາໄປຫາປາ, ລາຍລະອຽດຂອງຜູ້ຕາຍມີດັ່ງນີ້: ອາຍຸ 36 ປີ, ສູງ 1.68 ແມັດ, ຜົມດຳ, ປາກພ້າ..."

*# BAOKBU*

Notice outside police station: A REWARD IS OFFERED FOR THE BODY OF KEVIN LAFFAN, BELIEVED DROWNED FISHING.
DESCRIPTION: AGE 36, HEIGHT 1.68 M, BLACK HAIR, PRONOUNCED STUTTER.







● ໂດຍ : ພູຜາ

## ປັບປຸງ...

(ຕໍ່ຈາກໜ້າ 1)

ຂາທິການສູນກາງພັກ, ຫົວໜ້າຫ້ອງວ່າການສູນກາງພັກ ເປັນລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ.

2. ຍົກຍ້າຍທ່ານ ປອ. ເພັດ ພົມພິພັກ ກຳມະການສູນກາງພັກ, ລັດຖະມົນຕີກະຊວງແຜນການແລະການລົງທຶນ ໄປຮັບໜ້າທີ່ໃໝ່ຢູ່ຫ້ອງວ່າການສູນກາງພັກ.

3. ແຕ່ງຕັ້ງທ່ານ ສັນຕິພາບ ພົມວິຫານ ກຳມະການສູນກາງພັກ ເປັນລັດຖະມົນຕີກະຊວງການເງິນ.

4. ຍົກຍ້າຍທ່ານ ປອ. ວິໄລວົງ ບຸດດາຄຳ ກຳມະການສູນກາງພັກ, ລັດຖະມົນຕີກະຊວງພາຍໃນ ໄປຮັບໜ້າທີ່ໃໝ່ຢູ່ຄະນະຈັດຕັ້ງສູນກາງພັກ.

5. ຍົກຍ້າຍ ແລະ ແຕ່ງຕັ້ງທ່ານ ປອ. ນາງ ບຸນຄຳ ວໍລະຈິດ ກຳມະການສູນກາງພັກ, ລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ວ່າການທະນາຄານ ແຫ່ງ ສປປລາວ.

6. ຍົກຍ້າຍ ແລະ ແຕ່ງຕັ້ງທ່ານປອ. ໂພໄຊ ໄຊຍະສອນ ກຳມະການສູນກາງພັກ, ລັດຖະມົນຕີກະຊວງພະລັງງານ ແລະບໍ່ແຮ່ ເປັນລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

7. ຍົກຍ້າຍ ແລະ ແຕ່ງຕັ້ງທ່ານ ນາງ ໃບຄຳ ຂັດທິຍະ ກຳມະການສູນກາງພັກ, ລັດຖະມົນຕີກະຊວງແຮງງານ ແລະສະຫວັດດີການສັງຄົມ ເປັນລັດຖະມົນຕີກະຊວງສາທາລະນະສຸກ.

8. ແຕ່ງຕັ້ງທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ກຳມະການສຳຮອງສູນກາງພັກ, ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເປັນລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ.

9. ແຕ່ງຕັ້ງທ່ານ ມະໄລທອງ ກົມມະສິດ ກຳມະການສຳຮອງສູນກາງພັກເປັນລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ.

II. ເຫັນດີໃຫ້ສະມາຊິກລັດຖະບານ 2 ທ່ານ ອອກພັກການຮັບອຸດໜູນບຳນານ:

1. ທ່ານ ຣສ. ປອ. ພຸດ ສິມມາລາວົງ ກຳມະການສູນກາງພັກ, ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ.

2. ທ່ານ ປອ. ດຣ. ບຸນແຝງ ພູມມະໄລສິດ ກຳມະການສູນກາງພັກ, ລັດຖະມົນຕີກະຊວງສາທາລະນະສຸກ

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ